**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ

ເລກທີ 0035 /ກວຕ.

ນະຄອນຫຼວງວຽງຈັນ, ວັນທີ 20 JAN 2021

# ຂໍ້ຕົກລົງ

## ວ່າດ້ວຍແບບອຸດສາຫະກຳ

- ອີງຕາມ ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ (ສະບັບປັບປຸງ) ສະບັບເລກທີ 38/ສພຊ, ລົງວັນທີ 15 ພະຈິກ 2017;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ ສະບັບເລກທີ 314/ນຍ, ລົງວັນທີ 29 ກັນຍາ 2017;
- ອີງຕາມ ໜັງສືສະເໜີ ຂອງກົມຊັບສິນທາງປັນຍາ ສະບັບເລກທີ 218/ກວຕ.ກຊປ, ລົງວັນທີ 13 ມັງກອນ 2021.

**ລັດຖະມົນຕີ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ ແລະ ລະບຽບການ ກ່ຽວກັບການຈັດຕັ້ງປະຕິບັດວຽກງານແບບອຸດສາຫະກຳ ເປັນຕົ້ນ ການຈົດທະບຽນ, ການດຳເນີນຫຼັງການຈົດທະບຽນ, ການເປັນຜູ້ຕາງໜ້າ, ການທົບທວນຄືນທາງດ້ານບໍລິຫານ ແລະ ອົງການຄຸ້ມຄອງວຽກງານແບບອຸດສາຫະກຳ ເພື່ອຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ກ່ຽວກັບແບບອຸດສາຫະກຳ ໃຫ້ເປັນເອກະພາບ ໃນຂອບເຂດທົ່ວປະເທດ.

**ມາດຕາ 2 ແບບອຸດສາຫະກຳ**

ແບບອຸດສາຫະກຳ ແມ່ນຮູບແບບ ຫຼືຮູບຮ່າງ ຫຼື ຮູບຊົງພາຍນອກ ຂອງຜະລິດຕະພັນທີ່ສ້າງຂຶ້ນໃໝ່ຢູ່ ສປປ ລາວ ຫຼື ແຫ່ງໃດໜຶ່ງໃນໂລກທີ່ປະກອບດ້ວຍ ຮູບຮ່າງ, ລວດລາຍ, ເສັ້ນສາຍ, ສີສັນ ຫຼື ເປັນສິ່ງປະດັບ ຊຶ່ງເຮັດໃຫ້ວັດຖຸທີ່ນຳເອົາແບບໄປໃຊ້ ຫຼື ເອົາແບບໄປຕິດໃສ່ຕົວຂອງວັດຖຸເອງ ເກີດມີຮູບຊົງພາຍນອກພິເສດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ຢູ່ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ຮ້ອງຂໍ** ໝາຍເຖິງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຍື່ນຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ, ດັດແກ້, ຂໍຍົກເລີກບາງສ່ວນ ຫຼື ທັງໝົດ, ລົບລ້າງການຈົດທະບຽນແບບອຸດສາຫະກຳ ຫຼື ຜູ້ສືບທອດຜົນປະໂຫຍດຂອງບຸກຄົນດັ່ງກ່າວ;

2. **ຄຳຮ້ອງ** ໝາຍເຖິງສຳນວນເອກະສານການຍື່ນຄຳຮ້ອງ ຂໍຈົດທະບຽນແບບອຸດສາຫະກຳ, ດັດແກ້, ຍົກເລີກບາງສ່ວນ ຫຼື ທັງໝົດ;
3. **ຜູ້ຄັດຄ້ານ** ໝາຍເຖິງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ສະເໜີຂໍຄັດຄ້ານການ ຂໍຈົດທະບຽນແບບອຸດສາຫະກຳ;
4. **ການຄັດຄ້ານ** ໝາຍເຖິງບຸກຄົນທີສາມທີ່ໄດ້ລະບຸໄວ້ໃນຂໍ້ 3 ຂ້າງເທິງນີ້ ທີ່ໄດ້ຍື່ນຄຳສະເໜີຂໍຄັດຄ້ານການຂໍຈົດທະບຽນແບບອຸດສາຫະກຳ ທີ່ໄດ້ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ;
5. **ການຍົກເລີກ** ໝາຍເຖິງການຍື່ນຄຳຮ້ອງຂໍຍົກເລີກການຈົດທະບຽນແບບອຸດສາຫະກຳ ບາງສ່ວນ ຫຼືທັງໝົດໂດຍເຈົ້າຂອງເອງ ຫຼື ບຸກຄົນທີສາມ ທີ່ຍື່ນຄຳຮ້ອງຂໍຍົກເລີກການຈົດທະບຽນແບບອຸດສາຫະກຳບາງສ່ວນ ຫຼື ທັງໝົດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 44 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ;
6. **ການລົບລ້າງ** ໝາຍເຖິງບຸກຄົນທີສາມ ທີ່ຍື່ນຄຳສະເໜີຂໍລົບລ້າງການຈົດທະບຽນແບບອຸດສາຫະກຳທັງໝົດ;
7. **ໝວດ** ໝາຍເຖິງການຈັດໝວດຂອງສາກົນ ກ່ຽວກັບປະເພດຂອງແບບອຸດສາຫະກຳ ຕາມການຈັດໝວດໂລກາໂນ (LocarnoClassification) ສຳລັບການຈົດທະບຽນແບບອຸດສາຫະກຳ;
8. **ນັກອອກແບບ** ໝາຍເຖິງບຸກຄົນ ຫຼື ກຸ່ມຄົນ ທີ່ຮ່ວມກັນອອກແບບຜະລິດຕະພັນໃດໜຶ່ງ;
9. **ການໂອນສິດ** ໝາຍເຖິງການໂອນສິດບາງສ່ວນ ຫຼື ທັງໝົດ ຂອງເຈົ້າຂອງແບບອຸດສາຫະກຳ ໃຫ້ແກ່ຜູ້ຮັບສິດ;
10. **ການແຍກຄຳຮ້ອງ** ໝາຍເຖິງ ຜູ້ຮ້ອງຂໍໄດ້ແຍກຄຳຮ້ອງດຽວອອກເປັນສອງ ຫຼື ຫຼາຍສະບັບ ຊຶ່ງແຕ່ລະຄຳຮ້ອງທີ່ໄດ້ແຍກມານັ້ນຕ້ອງກ່ຽວຂ້ອງກັບແບບອຸດສາຫະກຳ ທີ່ຢູ່ໃນຄຳຮ້ອງຕົ້ນສະບັບ;
11. **ຜູ້ຖືສິດ ຫຼື ເຈົ້າຂອງສິດ** ໝາຍເຖິງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີສິດຕາມກົດໝາຍຕໍ່ກັບແບບອຸດສາຫະກຳ ຫຼື ຜູ້ໄດ້ຮັບມອບສິດ ຫຼື ຜູ້ສືບທອດຜົນປະໂຫຍດຈາກບຸກຄົນດັ່ງກ່າວ;
12. **ການອະນຸຍາດນຳໃຊ້** ໝາຍເຖິງການຕົກລົງຂອງເຈົ້າຂອງສິດໃຫ້ຜູ້ອື່ນນຳໃຊ້ສິດ ຕໍ່ກັບແບບອຸດສາຫະກຳຂອງຕົນ ເພື່ອນຳໃຊ້ສະເພາະແຕ່ພຽງຜູ້ດຽວລວມທັງການຕົກລົງບໍ່ໃຫ້ດຳເນີນການທາງດ້ານກົດໝາຍ ຕໍ່ຜູ້ໄດ້ຮັບອະນຸຍາດນຳໃຊ້ດັ່ງກ່າວ ຖ້າປະຕິບັດຕາມເງື່ອນໄຂຂອງການຕົກລົງ;
13. **ຜູ້ອະນຸຍາດນຳໃຊ້** ໝາຍເຖິງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ອອກໃບອະນຸຍາດນຳໃຊ້ສິດຕໍ່ກັບແບບອຸດສາຫະກຳ;
14. **ຜູ້ໄດ້ຮັບອະນຸຍາດນຳໃຊ້** ໝາຍເຖິງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບສິດນຳໃຊ້ຈາກເຈົ້າຂອງສິດຕໍ່ກັບແບບອຸດສາຫະກຳ;
15. **ໃບມອບສິດ** ໝາຍເຖິງເອກະສານທີ່ເປັນລາຍລັກອັກສອນ ຊຶ່ງເຈົ້າຂອງສິດໄດ້ມອບສິດຂອງຕົນໃຫ້ບຸກຄົນໜຶ່ງ ຫຼື ຫຼາຍຄົນປະຕິບັດໜ້າທີ່ແທນຕົນ;
16. **ຜູ້ມອບສິດ** ໝາຍເຖິງເຈົ້າຂອງແບບອຸດສາຫະກຳ ທີ່ມອບສິດຂອງຕົນໃຫ້ບຸກຄົນໜຶ່ງ ຫຼື ຫຼາຍຄົນປະຕິບັດໜ້າທີ່ແທນຕົນ ໃນການຍື່ນຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ຫຼື ດຳເນີນການອື່ນນຳກົມຊັບສິນທາງປັນຍາ;
17. **ຜູ້ຕາງໜ້າ** ໝາຍເຖິງທະນາຍຄວາມ ຫຼື ຕົວແທນ ທີ່ໄດ້ຮັບອະນຸຍາດຈາກເຈົ້າຂອງແບບອຸດສາຫະກຳ ໃນການຍື່ນຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ຫຼື ດຳເນີນການອື່ນ ນຳກົມຊັບສິນທາງປັນຍາ.

ມາດຕາ 4 ບຸກຄົນທີ່ມີສິດໄດ້ຮັບການປົກປ້ອງແບບອຸດສາຫະກຳ

ບຸກຄົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 26 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ມີສິດໄດ້ຮັບການປົກປ້ອງແບບອຸດສາຫະກຳ, ໄດ້ຮັບໃບຢັ້ງຢືນການຈົດທະບຽນ, ຕໍ່ອາຍຸໃບຢັ້ງຢືນການຈົດທະບຽນ, ດຳເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ, ຮ້ອງຟ້ອງຕໍ່ສານປະຊາຊົນ ແລະ ດຳເນີນການເຄື່ອນໄຫວອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້.

## ໝວດທີ 2
## ການຈົດທະບຽນແບບອຸດສາຫະກຳ

ມາດຕາ 5 ເງື່ອນໄຂທີ່ສາມາດໄດ້ຮັບໃບຢັ້ງຢືນການຈົດທະບຽນແບບອຸດສາຫະກຳ

ແບບອຸດສາຫະກຳ ທີ່ສາມາດໄດ້ຮັບໃບຢັ້ງຢືນແບບອຸດສາຫະກຳ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ຕ້ອງເປັນແບບໃໝ່ ຊຶ່ງບໍ່ເຄີຍຖືກເປີດເຜີຍ ສູ່ສາທາລະນະຊົນມາກ່ອນ ດ້ວຍອາລະສານ ຫຼື ດ້ວຍການນຳໃຊ້ຕົວຈິງ ຫຼື ດ້ວຍການວາງສະແດງ ຫຼື ດ້ວຍຮູບການອື່ນ ຢູ່ ສປປ ລາວ ຫຼື ແຫ່ງໃດໜຶ່ງໃນໂລກກ່ອນວັນຍື່ນຄຳຮ້ອງ ຫຼື ກ່ອນວັນບຸລິມະສິດ ຂອງຄຳຮ້ອງຂໍຈົດທະບຽນ;
2. ຕ້ອງເປັນສິ່ງປະດັບ ຊຶ່ງເຮັດໃຫ້ວັດຖຸທີ່ນຳເອົາແບບໄປໃຊ້ ຫຼື ເອົາແບບໄປຕິດໃສ່ຕົວຂອງວັດຖຸເອງ ເກີດມີຮູບຊົງພາຍນອກພິເສດ.

ສຳລັບແບບອຸດສາຫະກຳທີ່ບໍ່ສາມາດໄດ້ຮັບການຈົດທະບຽນ ແມ່ນໄດ້ກຳນົດໄວ້ໃນມາດຕາ 22 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ. ນອກນັ້ນ, ລັກສະນະທາງດ້ານເຕັກນິກທີ່ກ່ຽວຂ້ອງກັບແບບອຸດສາຫະກຳເຊັ່ນ: ວັດສະດຸທີ່ນຳໃຊ້, ວິທີການຜະລິດ ຫຼື ການປະຕິບັດງານ ແມ່ນບໍ່ສາມາດໄດ້ຮັບການປົກປ້ອງເປັນແບບອຸດສາຫະກຳ.

ມາດຕາ 6 ຂັ້ນຕອນການຍື່ນຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ສາມາດຍື່ນຄຳຮ້ອງຢູ່ນຳກົມຊັບສິນທາງປັນຍາ ຫຼື ພະແນກວິທະຍາສາດ ແລະ ເຕັກໂນໂລຊີແຂວງ, ນະຄອນຫຼວງ ຕາມແບບພິມຂອງກົມຊັບສິນທາງປັນຍາ ແລະ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ທີ່ຍື່ນຢູ່ນຳກົມຊັບສິນທາງປັນຍາ ຫຼື ພະແນກວິທະຍາສາດແລະເຕັກໂນໂລຊີແຂວງ, ນະຄອນຫຼວງ ຢ່າງໜ້ອຍຕ້ອງປະຕິບັດໃຫ້ໄດ້ຕາມເງື່ອນໄຂຕໍ່າສຸດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 32 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້;
2. ກົມຊັບສິນທາງປັນຍາຕ້ອງຮັບເອົາຄຳຮ້ອງ, ອອກໃບຮັບຄຳຮ້ອງຊຶ່ງລະບຸ ເລກທີ ແລະ ວັນທີຍື່ນຄຳຮ້ອງ ໃນກໍລະນີ ທີ່ຄຳຮ້ອງຫາກສອດຄ່ອງຕາມເງື່ອນໄຂຕໍ່າສຸດ;
3. ໃນກໍລະນີ ທີ່ຄຳຮ້ອງຫາກຍື່ນຜ່ານພະແນກວິທະຍາສາດ ແລະ ເຕັກໂນໂລຊີແຂວງ, ນະຄອນຫຼວງ ພະແນກຕ້ອງຮັບເອົາຄຳຮ້ອງ ແລະ ອອກໃບຮັບຄຳຮ້ອງຊຶ່ງລະບຸເວລາ ແລະ ວັນທີຮັບຄຳຮ້ອງ ຖ້າຄຳຮ້ອງຫາກສອດຄ່ອງຕາມເງື່ອນໄຂຕໍ່າສຸດ ແລ້ວສົ່ງຕໍ່ໃຫ້ກົມຊັບສິນທາງປັນຍາ ເພື່ອດຳເນີນການຕາມຂັ້ນຕໍ່ໄປ, ຫຼັງຈາກນັ້ນ ກົມຕ້ອງອອກໃບຮັບຄຳຮ້ອງເຊັ່ນດຽວກັນກັບຄຳຮ້ອງທີ່ຍື່ນໂດຍກົງ ຢູ່ນຳກົມຊັບສິນທາງປັນຍາ;
4. ກົມຊັບສິນທາງປັນຍາ ຫຼື ພະແນກວິທະຍາສາດ ແລະ ເຕັກໂນໂລຊີແຂວງ, ນະຄອນຫຼວງ ຈະບໍ່ຮັບເອົາຄຳຮ້ອງ ໃນກໍລະນີທີ່ ຄຳຮ້ອງຫາກບໍ່ສອດຄ່ອງຕາມເງື່ອນໄຂຕໍ່າສຸດ;

5. ໃນກໍລະນີ ທີ່ຜູ້ຮ້ອງຂໍຈົດທະບຽນຫາກມີຈຸດປະສົງຂໍຖອນຄຳຮ້ອງ ຫຼື ຄຳຮ້ອງຖືກສະຫຼະສິດ ຫຼື ຖືກປະຕິເສດ ຈະບໍ່ມີການສົ່ງຄືນຄ່າທຳນຽມ ແລະ ຄ່າບໍລິການ ທີ່ໄດ້ຈ່າຍໄປແລ້ວ;
6. ໃນກໍລະນີ ທີ່ຜູ້ຮ້ອງຂໍຈົດທະບຽນຫາກຮຽກເອົາວັນບູລິມະສິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 29 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ຊຶ່ງມີໄລຍະເວລາຂໍຮັບວັນບູລິມະສິດສຳລັບແບບອຸດສາຫະກຳແມ່ນ ຫົກເດືອນ ນັບແຕ່ວັນທີ່ໄດ້ຮັບວັນບູລິມະສິດເປັນຕົ້ນໄປ, ໃນກໍລະນີ ວັນສຸດທ້າຍຂອງໄລຍະເວລາດັ່ງກ່າວ ຫາກແມ່ນວັນພັກທາງລັດຖະການ ຫຼື ເປັນວັນທີ່ກົມຊັບສິນທາງປັນຍາ ບໍ່ສາມາດຮັບຄຳຮ້ອງໄດ້ ໃນກໍລະນີສຸກເສີນ, ຕ້ອງຕໍ່ໄລຍະເວລາດັ່ງກ່າວ ອອກໄປຈົນເຖິງວັນລັດຖະການທຳອິດຖັດໄປ.

**ມາດຕາ 7 ສຳນວນຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ**

ສຳນວນຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ປະກອບມີເອກະສານ ດັ່ງນີ້:

1. ຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳຕາມແບບພິມຂອງກົມຊັບສິນທາງປັນຍາ;
2. ໃບມອບສິດທີ່ເປັນຕົ້ນສະບັບ ໃນກໍລະນີ ທີ່ຍື່ນຜ່ານຜູ້ຕາງໜ້າ;
3. ສຳລັບຜູ້ຮ້ອງຂໍທີ່ບໍ່ແມ່ນ ຜູ້ອອກແບບອຸດສາຫະກຳເອງ ຈະຕ້ອງຍື່ນໜັງສືຢັ້ງຢືນ ກ່ຽວກັບການຖືສິດຂອງຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກຳ.
4. ໃນກໍລະນີ ຜູ້ຮ້ອງຂໍ ຮຽກເອົາວັນບູລິມະສິດ ໂດຍອີງໃສ່ຄຳຮ້ອງທີ່ໄດ້ຍື່ນກ່ອນໜ້ານີ້ຢູ່ ສປປ ລາວ ຫຼື ຕ່າງປະເທດ ຕ້ອງປະຕິບັດຕາມເງື່ອນໄຂທີ່ກຳນົດໄວ້ໃນວັກ 4 ມາດຕາ 29 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.
5. ຮູບແຕ້ມ, ຮູບຖ່າຍ, ຮູບພາບ ຫຼື ຕົວແບບ ທີ່ບົ່ງບອກເຖິງແບບອຸດສາຫະກຳຢ່າງຈະແຈ້ງ ເພື່ອສະແດງໃຫ້ເຫັນລັກສະນະຮູບຊົງທຸກມູມຂອງແບບນັ້ນຈະຕ້ອງສະແດງໃຫ້ເຫັນຢ່າງໜ້ອຍ 7 ມູມ ທີ່ແຕກຕ່າງກັນຄື: ໜ້າ, ຫຼັງ, ເທິງ, ລຸ່ມ, ຂ້າງຊ້າຍ, ຂ້າງຂວາ ແລະ ຮູບລວມ. ສຳລັບແບບອຸດສາຫະກຳທີ່ເປັນຊຸດ ຕ້ອງປະກອບມີ7 ຮູບຂອງມູມທີ່ແຕກຕ່າງກັນຂອງແຕ່ລະອັນ ທີ່ປະກອບຢູ່ໃນຊຸດດັ່ງກ່າວ;
6. ບົດອະທິບາຍໂດຍສັງເຂບ ກ່ຽວກັບຊະນິດຂອງຜະລິດຕະພັນ ຫຼື ສິນຄ້າທີ່ກ່ຽວຂ້ອງກັບແບບອຸດສາຫະກຳ;
7. ໃບຮັບເງິນຄ່າທຳນຽມແລະຄ່າບໍລິການ.

**ມາດຕາ 8 ເງື່ອນໄຂຕໍ່າສຸດໃນການໄດ້ຮັບວັນທີຍື່ນຄຳຮ້ອງ**

ຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ທີ່ມີເງື່ອນໄຂຕໍ່າສຸດ ໃນການໄດ້ຮັບວັນທີຍື່ນຄຳຮ້ອງຕ້ອງປະກອບດ້ວຍ:

1. ຊື່, ທີ່ຢູ່, ສັນຊາດຂອງຜູ້ຮ້ອງຂໍຈົດທະບຽນ;
2. ຮູບແຕ້ມ, ຮູບຖ່າຍ ຫຼື ຮູບພາບ ທີ່ບົ່ງບອກເຖິງແບບອຸດສາຫະກຳຢ່າງຈະແຈ້ງ ເພື່ອສະແດງໃຫ້ເຫັນລັກສະນະຮູບຊົງທຸກມູມຂອງແບບນັ້ນ;
3. ໃບຮັບເງິນຄ່າທຳນຽມ ແລະ ຄ່າບໍລິການ.

ນອກນັ້ນ, ໃນກໍລະນີ ຍື່ນຜ່ານຜູ້ຕາງໜ້າຍັງຕ້ອງມີໃບມອບສິດ, ຊື່ລະບຸຊື່ ແລະ ທີ່ຢູ່ຂອງຜູ້ຕາງໜ້າ. ຄຳຮ້ອງທີ່ຍື່ນພາຍໃຕ້ເງື່ອນໄຂຕໍ່າສຸດນີ້ ຕ້ອງໄດ້ປະກອບເອກະສານໃຫ້ຄົບຖ້ວນ ພາຍໃນ ສິບຫ້າວັນ ເພື່ອຈະໄດ້ຮັບການກວດສອບເບື້ອງຕົ້ນໃນຂັ້ນຕໍ່ໄປ.

**ມາດຕາ 9 ຮູບແຕ້ມ, ຮູບຖ່າຍ ຫຼື ຮູບພາບ**

ຮູບແຕ້ມ, ຮູບຖ່າຍ ຫຼື ຮູບພາບ ຕ້ອງສະແດງໃຫ້ເຫັນແບບອຸດສາຫະກໍາຢ່າງຈະແຈ້ງ ເພື່ອຊີ້ໃຫ້ເຫັນວ່າ ການນໍາໃຊ້ ຫຼື ຮູບຊົງຂອງແບບອຸດສາຫະກໍາ ນັ້ນມີຄວາມກ່ຽວຂ້ອງກັນແນວໃດ. ຮູບແຕ້ມ, ຮູບຖ່າຍ ຫຼື ຮູບພາບຕ້ອງສະແດງໃຫ້ເຫັນລາຍລະອຽດຂອງທຸກມຸມຕາມຄວາມຈໍາເປັນ ເພື່ອສາມາດລະບຸລັກສະນະຂອງແບບອຸດສາຫະກໍາດັ່ງກ່າວ.

ໃນກໍລະນີ ທີ່ແບບອຸດສາຫະກໍາເປັນແບບສອງມິຕິສາມາດສະໜອງຕົວແບບ ເພີ່ມຕື່ມ ທີ່ສາມາດຈໍາແນກໄດ້ລັກສະນະທີ່ແຕກຕ່າງກັນຂອງແບບອຸດສາຫະກໍາ ຊຶ່ງຕົວແບບດັ່ງກ່າວ ຕ້ອງມີຂະໜາດບໍ່ເກີນ 20 x 20 x 20 ຊັງຕີແມັດ.

ໃນກໍລະນີ ທີ່ແບບອຸດສາຫະກໍາເປັນແບບສາມມິຕິຕ້ອງປະກອບມີຮູບພາບໂດຍລວມ ແລະ ຮູບພາບເພີ່ມຕື່ມອື່ນໆທີ່ຈໍາເປັນ ເພື່ອສາມາດຈໍາແນກໄດ້ລັກສະນະທີ່ແຕກຕ່າງກັນຂອງແບບອຸດສາຫະກໍາ.

ຮູບແຕ້ມ, ຮູບຖ່າຍ ຫຼື ຮູບພາບ ຕ້ອງບໍ່ລວມເອົາວັດຖຸອື່ນ ຊຶ່ງບໍ່ແມ່ນອົງປະກອບຂອງແບບອຸດສາຫະກໍາ ຫຼື ພາກສ່ວນຂອງຜະລິດຕະພັນທີ່ບໍ່ກ່ຽວຂ້ອງກັບແບບອຸດສາຫະກໍາ.

ຮູບແຕ້ມ, ຮູບຖ່າຍ ຫຼື ຮູບພາບ ຕ້ອງເຮັດໃສ່ເຈ້ຍທີ່ມີຄຸນນະພາບ ແລະ ບໍ່ເຫຼື້ອມ ໂດຍສະແດງໃຫ້ເຫັນແບບອຸດສາຫະກໍາຢ່າງຈະແຈ້ງ. ບັນດາເສັ້ນສາຍ ຫຼື ລວດລາຍ ຕ້ອງມີຄວາມຈະແຈ້ງ, ເຂັ້ມ ແລະ ມີຂະໜາດບໍ່ເກີນ 20x28 ຊັງຕີແມັດ ແລະ ບໍ່ໃຫ້ນ້ອຍກວ່າ 14x20 ຊັງຕີແມັດ ຕໍ່ໜຶ່ງຮູບ. ຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ສາມາດສະໜອງຮູບແຕ້ມ, ຮູບຖ່າຍ ຫຼື ຮູບພາບ ຂອງແບບອຸດສາຫະກໍາໃນຮູບແບບເອເລັກໂຕຼນິກກໍ່ໄດ້.

**ມາດຕາ 10 ບົດອະທິບາຍໂດຍສັງເຂບ**

ບົດອະທິບາຍໂດຍສັງເຂບຂອງແບບອຸດສາຫະກໍາ ທີ່ຍື່ນຂໍຈົດທະບຽນ ຕ້ອງສະແດງໃຫ້ເຫັນທຸກສ່ວນປະກອບທີ່ບົ່ງບອກໃຫ້ເຫັນລັກສະນະສະເພາະຂອງການອອກແບບຢ່າງຊັດເຈນ, ບົ່ງບອກໃຫ້ເຫັນຄວາມໃໝ່ທີ່ແຕກຕ່າງຈາກແບບອຸດສາຫະກໍາທີ່ມີມາກ່ອນແລ້ວ, ຕ້ອງໃຫ້ສອດຄ່ອງຕາມຮູບແຕ້ມ, ຮູບຖ່າຍ ຫຼື ຮູບພາບ ທີ່ໄດ້ຍື່ນມາໃນສໍານວນຄໍາຮ້ອງ ແລະ ຕ້ອງລະບຸວ່າແບບດັ່ງກ່າວ ຈະເອົາໄປນໍາໃຊ້ກັບ ຜະລິດຕະພັນ ຫຼື ສິນຄ້າ ຊະນິດໃດ.

ໃນກໍລະນີ ແບບອຸດສາຫະກໍາ ທີ່ເປັນສິ່ງປະດັບ ຄໍາອະທິບາຍຕ້ອງສະແດງໃຫ້ເຫັນຄວາມກ່ຽວຂ້ອງຂອງແບບກັບວັດຖຸ ທີ່ຈະນໍາເອົາໄປໃຊ້ ຫຼື ເອົາແບບໄປຕິດໃສ່ຕົວຂອງວັດຖຸນັ້ນເອງ ຊຶ່ງເຮັດໃຫ້ເກີດມີຮູບຊົງພາຍນອກພິເສດ.

ໃນກໍລະນີແບບອຸດສາຫະກໍາທີ່ເປັນຊຸດຜະລິດຕະພັນ ຫຼື ສິນຄ້າ, ຄໍາອະທິບາຍຕ້ອງສະແດງໃຫ້ເຫັນເຖິງຄຸນລັກສະນະຂອງແຕ່ລະອັນຂອງຊຸດຜະລິດຕະພັນ ຫຼື ສິນຄ້າ ນັ້ນ ຢ່າງຊັດເຈນ.

**ມາດຕາ 11 ການຈັດໝວດສາກົນກ່ຽວກັບແບບອຸດສາຫະກໍາ**

ຄໍາຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ຕ້ອງລະບຸໝວດຕາມການຈັດໝວດສາກົນ ສໍາລັບປະເພດຂອງແບບອຸດສາຫະກໍາ.

ເນື່ອງຈາກວ່າການຈັດໝວດສາກົນມີການປ່ຽນແປງເປັນແຕ່ລະໄລຍະ, ດັ່ງນັ້ນຄໍາຮ້ອງຕ້ອງລະບຸການຈັດໝວດປະເພດແບບອຸດສາຫະກໍາ ຕາມການຈັດໝວດສາກົນ ທີ່ກໍາລັງນໍາໃຊ້ໃນເວລາຍື່ນຄໍາຮ້ອງ.

ໃນກໍລະນີ ການຈັດໝວດສາກົນຫາກມີການປ່ຽນແປງໃນລະຫວ່າງການດໍາເນີນການພິຈາລະນາຄໍາຮ້ອງກົມ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍຈົດທະບຽນ ດັດແກ້ຄໍາຮ້ອງເພື່ອລະບຸໝວດທີ່ຖືກຕ້ອງ.

### ມາດຕາ 12 ຫຼັກການພິຈາລະນາຄໍາຮ້ອງຂໍຈົດທະບຽນແບບອຸດສາຫະກໍາ

ການພິຈາລະນາຄໍາຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ຕ້ອງປະຕິບັດຕາມຫຼັກການ ທີ່ໄດ້ກໍານົດໄວ້ໃນ ມາດຕາ 28 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ. ໃນກໍລະນີ ມີການຍື່ນຄໍາຮ້ອງຂໍຈົດທະບຽນແບບອຸດສາຫະກໍາຫຼາຍສະບັບພາຍໃນໄລຍະດຽວກັນ ທີ່ເປັນແບບດຽວກັນ ຫຼື ຄ້າຍຄືກັນ ຊຶ່ງສໍາລັບປະເພດແບບອຸດສາຫະກໍາດຽວກັນ ຫຼື ຄ້າຍຄືກັນນັ້ນໃຫ້ພິຈາລະນາຄໍາຮ້ອງທີ່ມີວັນບຸລິມະສິດກ່ອນ.

ໃນກໍລະນີ ທີ່ກົມຊັບສິນທາງປັນຍາ ໄດ້ດໍາເນີນຕາມຂັ້ນຕອນການພິຈາລະນາຄໍາຮ້ອງແລ້ວ ໃຫ້ຈົດທະບຽນຄໍາຮ້ອງທີ່ໄດ້ຮັບວັນບຸລິມະສິດກ່ອນ, ພ້ອມທັງອອກໜັງສືແຈ້ງປະຕິເສດຄໍາຮ້ອງທີ່ໄດ້ຮັບວັນບຸລິມະສິດຕາມຫຼັງ. ໃນກໍລະນີ ທີ່ການພິຈາລະນາຄໍາຮ້ອງທີ່ໄດ້ຮັບວັນບຸລິມະສິດຕາມຫຼັງນັ້ນຫາກສໍາເລັດກ່ອນ ແລະ ຄໍາຮ້ອງດັ່ງກ່າວ ມີເງື່ອນໄຂໃນການໄດ້ຮັບການຈົດທະບຽນ, ກົມຊັບສິນທາງປັນຍາ ຕ້ອງໂຈະການພິຈາລະນາຄໍາຮ້ອງດັ່ງກ່າວນັ້ນໄວ້ກ່ອນຈົນກວ່າການພິຈາລະນາຄໍາຮ້ອງທີ່ໄດ້ຮັບວັນບຸລິມະສິດກ່ອນນັ້ນຈະສິ້ນສຸດລົງ.

ກົມຊັບສິນທາງປັນຍາ ຈະບໍ່ໃຫ້ຄໍາປຶກສາທາງດ້ານກົດໝາຍ ແລະ ບໍ່ໃຫ້ຄໍາແນະນໍາ ກ່ຽວກັບຄວາມເປັນໄປໄດ້ວ່າແບບອຸດສາຫະກໍານັ້ນ ສອດຄ່ອງຕາມກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້, ແຕ່ຜູ້ຮ້ອງຂໍຈົດທະບຽນສາມາດຍື່ນຄໍາຮ້ອງຂໍຄົ້ນຫາແບບອຸດສາຫະກໍາ ຢູ່ໃນຖານຂໍ້ມູນຂອງກົມຊັບສິນທາງປັນຍາເພື່ອໃຫ້ຮູ້ວ່າແບບອຸດສາຫະກໍາທີ່ຂໍຄົ້ນຫານັ້ນໄດ້ຈົດທະບຽນແລ້ວ ຫຼື ບໍ່ໂດຍຕ້ອງລະບຸໝວດຂອງປະເພດແບບອຸດສາຫະກໍາ ທີ່ຕ້ອງການຄົ້ນຫາພ້ອມທັງຈ່າຍຄ່າບໍລິການ.

ຜົນຂອງການຄົ້ນຫາແບບອຸດສາຫະກໍາເປັນພຽງແຕ່ການກວດຄົ້ນຫາຂໍ້ມູນ ກ່ຽວກັບແບບອຸດສາຫະກໍາຢູ່ໃນຖານຂໍ້ມູນຂອງກົມຊັບສິນທາງປັນຍາ ເບື້ອງຕົ້ນເທົ່ານັ້ນ, ແຕ່ບໍ່ໝາຍວ່າແບບອຸດສາຫະກໍາດັ່ງກ່າວ ຈະສາມາດຈົດທະບຽນໄດ້ ເພາະຍັງຕ້ອງມີການກວດຄົ້ນຢູ່ໃນຖານຂໍ້ມູນຂອງສາກົນ ຕື່ມອີກ.

### ມາດຕາ 13 ການກວດສອບເບື້ອງຕົ້ນ

ພາຍຫຼັງທີ່ກົມຊັບສິນທາງປັນຍາ ໄດ້ໃຫ້ເລກທີຍື່ນຄໍາຮ້ອງຂໍຈົດທະບຽນແບບອຸດສາຫະກໍາແລ້ວ ກົມຕ້ອງດໍາເນີນການກວດສອບເບື້ອງຕົ້ນ ກ່ຽວກັບຄວາມຄົບຖ້ວນ, ຄວາມຖືກຕ້ອງ ແລະ ຄວາມສອດຄ່ອງ ຂອງສໍານວນຄໍາຮ້ອງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 32 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ມາດຕາ 5, 6, 7,9, 10 ແລະ 11 ຂອງຂໍ້ຕົກລົງສະບັບນີ້. ການກວດສອບເບື້ອງຕົ້ນ ຕ້ອງດໍາເນີນການ ພາຍໃນ ຫົກສິບວັນ ນັບແຕ່ວັນຮັບຄໍາຮ້ອງເປັນຕົ້ນໄປ.

ໃນກໍລະນີ ທີ່ສໍານວນຄໍາຮ້ອງຫາກບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງ ຫຼື ບໍ່ສອດຄ່ອງ ຕາມເງື່ອນໄຂທີ່ໄດ້ກໍານົດໄວ້, ກົມຕ້ອງແຈ້ງໃຫ້ຜູ້ຮ້ອງຂໍຈົດທະບຽນສະໜອງເອກະສານ ຫຼື ດັດແກ້ໃຫ້ໄດ້ຕາມເງື່ອນໄຂດັ່ງກ່າວ ພາຍໃນຫົກສິບວັນ ນັບແຕ່ວັນອອກແຈ້ງການເປັນຕົ້ນໄປ.

ໃນກໍລະນີ ຜູ້ຮ້ອງຂໍຈົດທະບຽນ ຫາກບໍ່ສາມາດປະຕິບັດ ພາຍໃນກໍານົດເວລາດັ່ງກ່າວ ກົມຊັບສິນທາງປັນຍາຕ້ອງແຈ້ງເປັນລາຍລັກອັກສອນ ໃຫ້ຜູ້ກ່ຽວຊາບວ່າຄໍາຮ້ອງດັ່ງກ່າວ ຈະບໍ່ຖືກພິຈາລະນາ ແລະ ຖືວ່າສະຫຼະສິດ.

ໃນກໍລະນີ ສໍານວນຄໍາຮ້ອງຫາກສອດຄ່ອງຕາມເງື່ອນໄຂການກວດສອບເບື້ອງຕົ້ນ ກົມຊັບສິນທາງປັນຍາຕ້ອງເຜີຍແຜ່ຄໍາຮ້ອງດັ່ງກ່າວ ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກໍາ.

### ມາດຕາ 14 ການແຍກຄໍາຮ້ອງ

ຄໍາຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ໃດໜຶ່ງສາມາດແຍກອອກເປັນສອງສະບັບ ຫຼື ຫຼາຍສະບັບໄດ້ທຸກເວລາ ແຕ່ຕ້ອງດໍາເນີນກ່ອນໜ້າການອອກໃບຢັ້ງຢືນການຈົດທະບຽນ, ການປະຕິເສດຂັ້ນສຸດທ້າຍ ຫຼື ການຍົກເລີກ. ການຍື່ນຄໍາຮ້ອງຂໍຈົດທະບຽນທີ່ຖືກແຍກອອກມານັ້ນຕ້ອງອ້າງອີງໃສ່ຄໍາຮ້ອງສະບັບເດີມທີ່ຍື່ນໃນເບື້ອງຕົ້ນ ແລະ ອະທິບາຍວ່າຄໍາຮ້ອງທີ່ຍື່ນມາໃໝ່ນັ້ນໄດ້ແຍກອອກມາຈາກຄໍາຮ້ອງສະບັບເດີມ ໂດຍລະບຸເລກທີ ແລະວັນທີຍື່ນຄໍາຮ້ອງສະບັບເດີມໃສ່ຄໍາຮ້ອງທີ່ຍື່ນມາໃໝ່ແຕ່ລະສະບັບ. ສໍາລັບຄໍາຮ້ອງສະບັບເດີມນັ້ນຕ້ອງ

ມີການດັດແກ້ໂດຍຮັກສາໄວ້ພຽງແຕ່ໝວດຂອງປະເພດແບບອຸດສາຫະກໍາທີ່ຍັງເຫຼືອ. ຄໍາຮ້ອງທີ່ແຍກອອກມານັ້ນຕ້ອງຍື່ນພ້ອມກັບຄໍາຮ້ອງສະບັບເດີມທີ່ຖືກດັດແກ້ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 6 ຂອງຂໍ້ຕົກລົງສະບັບນີ້.

ຄໍາຮ້ອງທີ່ຖືກແຍກອອກມາແຕ່ລະສະບັບ ມີສິດໄດ້ຮັບວັນທີຍື່ນຄໍາຮ້ອງຕາມຄໍາຮ້ອງສະບັບເດີມ ຊຶ່ງຄໍາຮ້ອງທີ່ຖືກແຍກອອກມາແຕ່ລະສະບັບຕ້ອງຈ່າຍຄ່າທໍານຽມ ແລະ ຄ່າບໍລິການ.

**ມາດຕາ 15 ການເຜີຍແຜ່ຄໍາຮ້ອງ ແລະ ການສະເໜີຂໍຄັດຄ້ານ**

ກົມຊັບສິນທາງປັນຍາ ຕ້ອງເຜີຍແຜ່ຄໍາຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກໍາ ພາຍໃນກໍານົດເວລາ ສິບຫ້າວັນ ພາຍຫຼັງສໍາເລັດການກວດສອບເບື້ອງຕົ້ນຂອງສໍານວນຄໍາຮ້ອງຂໍຈົດທະບຽນແບບອຸດສາຫະກໍາ, ຊຶ່ງການເຜີຍແຜ່ຕ້ອງປະກອບມີຂໍ້ມູນດັ່ງລຸ່ມນີ້:

1. ຫົວຂໍ້ຂອງແບບອຸດສາຫະກໍາ;
2. ຮູບຂອງແບບອຸດສາຫະກໍາ;
3. ໝວດຂອງປະເພດແບບອຸດສາຫະກໍາ;
4. ເລກທີ ແລະ ວັນທີຍື່ນຄໍາຮ້ອງ;
5. ຊື່ ແລະ ທີ່ຢູ່ຂອງຜູ້ຍື່ນຄໍາຮ້ອງ.

ໃນກໍລະນີ ທີ່ຜູ້ຮ້ອງຂໍມີຈຸດປະສົງ ບໍ່ໃຫ້ເປີດເຜີຍຮູບຂອງແບບອຸດສາຫະກໍາ ຕໍ່ສາທາລະນະຊົນ ແລະ ຕ້ອງຍື່ນພ້ອມດຽວກັນກັບ ໃນເວລາທີ່ຍື່ນຄໍາຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ຜູ້ຮ້ອງຂໍສາມາດສະເໜີຂໍເລື່ອນການເປີດເຜີຍຮູບຂອງແບບອຸດສາຫະກໍາ ເຊັ່ນ: ຮູບແຕ້ມ, ຮູບຖ່າຍ, ຮູບພາບ ຫຼື ຕົວແບບ ໃນໄລຍະເວລາທີ່ມີການພິມເຜີຍແຜ່ຄໍາຮ້ອງ ແລະ ການພິມເຜີຍແຜ່ການຈົດທະບຽນແບບອຸດສາຫະກໍາ. ການເລື່ອນການເຜີຍແຜ່ດັ່ງກ່າວ ແມ່ນຕ້ອງບໍ່ເກີນ ສິບແປດເດືອນ ນັບແຕ່ວັນຍື່ນຄໍາຮ້ອງ ຫຼື ວັນບຸລິມະສິດ (ຖ້າມີ) ເປັນຕົ້ນໄປ ແລະ ຕ້ອງຈ່າຍຄ່າທໍານຽມ ແລະ ຄ່າບໍລິການ.

ບຸກຄົນທີສາມ ສາມາດສະເໜີຄັດຄ້ານຄໍາຮ້ອງດັ່ງກ່າວ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 39 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ ພາຍໃນ ຫົກສິບວັນ ນັບແຕ່ວັນທີທີ່ໄດ້ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກໍາ ໂດຍປະກອບຕາມແບບພິມຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ.

ສໍານວນຄໍາຮ້ອງຂໍຄັດຄ້ານການຂໍຈົດທະບຽນແບບອຸດສາຫະກໍາ ຕ້ອງປະກອບມີເອກະສານ ດັ່ງນີ້:

1. ໃບຄໍາຮ້ອງຂໍຄັດຄ້ານການຂໍຈົດທະບຽນແບບອຸດສາຫະກໍາ;
2. ເອກະສານ ແລະ ຫຼັກຖານຊີ້ແຈງ ກ່ຽວກັບການຄັດຄ້ານ;
3. ໃບຮັບເງິນຄ່າບໍລິການ.

**ມາດຕາ 16 ການພິຈາລະນາ ການຄັດຄ້ານຄໍາຮ້ອງຂໍຈົດທະບຽນ**

ການພິຈາລະນາ ການຄັດຄ້ານຄໍາຮ້ອງຂໍຈົດທະບຽນຕ້ອງດໍາເນີນ ດັ່ງນີ້:

1. ກົມຊັບສິນທາງປັນຍາ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ທີ່ຖືກຄັດຄ້ານນັ້ນຊາບຢ່າງທັນການພາຍຫຼັງໄດ້ຮັບຄໍາຮ້ອງຂໍຄັດຄ້ານ;
2. ຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ຕ້ອງຍື່ນຄໍາຊີ້ແຈງເພື່ອໂຕ້ແຍ້ງ ກ່ຽວກັບການຄັດຄ້ານພ້ອມດ້ວຍຂໍ້ມູນຫຼັກຖານ ກ່ຽວກັບແບບອຸດສາຫະກໍາຂອງຕົນ ເຖິງກົມຊັບສິນທາງປັນຍາ ພາຍໃນຫົກສິບວັນ ນັບແຕ່ວັນອອກແຈ້ງການຂອງກົມ ກ່ຽວກັບການຄັດຄ້ານດັ່ງກ່າວ;
3. ກົມຊັບສິນທາງປັນຍາ ຕ້ອງສົ່ງສໍາເນົາຄໍາຊີ້ແຈງນັ້ນໃຫ້ຜູ້ຂໍຄັດຄ້ານຊາບ;
4. ກົມຊັບສິນທາງປັນຍາ ຕ້ອງພິຈາລະນາຄໍາຊີ້ແຈງ ແລະ ຂໍ້ມູນຫຼັກຖານດັ່ງກ່າວ;

5. ໃນກໍລະນີ ຂໍ້ມູນຫຼັກຖານຂອງຜູ້ຂໍຄັດຄ້ານ ແລະ/ຫຼື ຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ຫາກບໍ່ຄົບຖ້ວນ ຫຼື ບໍ່ຊັດເຈນກົມຊັບສິນທາງປັນຍາ ຈະອອກໜັງສືເຊີນໃຫ້ຄູ່ກໍລະນີມາຊີ້ແຈງ ຫຼື ສະແດງຫຼັກຖານ ຫຼື ສະໜອງຂໍ້ມູນເພີ່ມຕື່ມ;
6. ຖ້າຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ຫຼື ຜູ້ຂໍຄັດຄ້ານ ຫາກບໍ່ປະຕິບັດຕາມໜັງສືເຊີນຂອງກົມຊັບສິນທາງປັນຍາ ພາຍໃນ ຫົກສິບວັນ ນັບແຕ່ວັນອອກໜັງສືເຊີນ, ກົມຈະພິຈາລະນາການຄັດຄ້ານຕາມຫຼັກຖານທີ່ມີ;
7. ກົມຊັບສິນທາງປັນຍາ ຕ້ອງແຈ້ງຜົນການພິຈາລະນາພ້ອມດ້ວຍເຫດຜົນໃຫ້ຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ແລະ ຜູ້ຂໍຄັດຄ້ານຊາບ;
8. ກົມຊັບສິນທາງປັນຍາ ຕ້ອງປະຕິເສດຄໍາຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ຫາກກົມພິຈາລະນາແລ້ວເຫັນວ່າການຄັດຄ້ານມີເຫດຜົນ ແລະ ມີຫຼັກຖານພຽງພໍ;
9. ກົມຊັບສິນທາງປັນຍາ ຕ້ອງສືບຕໍ່ພິຈາລະນາຄໍາຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ໃນກໍລະນີກົມຫາກພິຈາລະນາແລ້ວເຫັນວ່າການຄັດຄ້ານບໍ່ມີເຫດຜົນ ແລະ ບໍ່ມີຫຼັກຖານພຽງພໍ;
10. ຖ້າຄູ່ກໍລະນີຫາກບໍ່ພໍໃຈຕໍ່ຜົນການພິຈາລະນາດັ່ງກ່າວ ແມ່ນສາມາດສະເໜີຂໍໃຫ້ພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ ເຖິງກົມຊັບສິນທາງປັນຍາ ເພື່ອແຕ່ງຕັ້ງຄະນະກໍາມະການພິຈາລະນາຂັ້ນສຸດທ້າຍໃນການຕັດສິນ ຊຶ່ງຕ້ອງສະເໜີພາຍໃນ ຫົກສິບວັນ ນັບແຕ່ວັນອອກແຈ້ງການຂອງກົມເປັນຕົ້ນໄປ.

**ມາດຕາ 17 ການກວດສອບເນື້ອໃນ**

ກົມຊັບສິນທາງປັນຍາ ຕ້ອງດໍາເນີນການກວດສອບເນື້ອໃນໂດຍອີງຕາມຖານຂໍ້ມູນຂອງກົມ ແລະ ສາກົນຕາມທີ່ໄດ້ກໍານົດໄວ້ໃນມາດຕາ 40 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ເພື່ອພິຈາລະນາຄໍາຮ້ອງນັ້ນໃຫ້ສອດຄ່ອງຕາມເງື່ອນໄຂທີ່ໄດ້ກໍານົດໄວ້ໃນມາດຕາ 15 ແລະ ສອດຄ່ອງກັບມາດຕາ 22 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

ກົມຊັບສິນທາງປັນຍາ ຈະປະຕິເສດຄໍາຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ໃນກໍລະນີ ທີ່ສໍານວນຄໍາຮ້ອງດັ່ງກ່າວ ບໍ່ສອດຄ່ອງຕາມເງື່ອນໄຂຂອງການຈົດທະບຽນ ແລະ ຕ້ອງແຈ້ງເຫດຜົນໃນການປະຕິເສດເບື້ອງຕົ້ນໃຫ້ຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກໍາຊາບ.

ຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກໍາມີໜ້າທີ່ສະໜອງຂໍ້ມູນ ແລະ ເອກະສານຫຼືຄໍາຊີ້ແຈງພາຍຫຼັງທີ່ໄດ້ຮັບແຈ້ງການປະຕິເສດເບື້ອງຕົ້ນ ຕໍ່ກົມຊັບສິນທາງປັນຍາ ພາຍໃນ ຫົກສິບວັນ ນັບແຕ່ວັນອອກແຈ້ງການເປັນຕົ້ນໄປ.

ກົມຊັບສິນທາງປັນຍາ ສາມາດຮຽກເອົາຂໍ້ມູນເພີ່ມຕື່ມຈາກຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ໃນກໍລະນີຈໍາເປັນ. ຖ້າຜູ້ຮ້ອງຂໍຈົດທະບຽນຫາກບໍ່ປະຕິບັດຕາມກໍານົດເວລາໃນແຈ້ງການຄໍາຮ້ອງດັ່ງກ່າວ ຈະບໍ່ຖືກພິຈາລະນາ ແລະ ຖືວ່າຖືກສະຫຼະສິດ.

ກົມຊັບສິນທາງປັນຍາສາມາດຕໍ່ເວລາໃຫ້ຕື່ມອີກ ສາມສິບວັນນັບແຕ່ວັນສິ້ນສຸດແຈ້ງການຄັ້ງທໍາອິດເປັນຕົ້ນໄປຖ້າມີເຫດຜົນພຽງພໍ.

ກົມຊັບສິນທາງປັນຍາ ຕ້ອງປະຕິເສດຂັ້ນສຸດທ້າຍຕໍ່ຄໍາຮ້ອງຂໍຈົດທະບຽນແບບອຸດສາຫະກໍາດັ່ງກ່າວ ແລະ ແຈ້ງໃຫ້ຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກໍາຊາບ ເມື່ອເຫັນວ່າ ການສະໜອງຂໍ້ມູນ, ເອກະສານ ຫຼື ຄໍາຊີ້ແຈງບໍ່ສອດຄ່ອງກັບເງື່ອນໄຂຂອງການຈົດທະບຽນ.

ໃນກໍລະນີທີ່ ຮູບແຕ້ມ, ຮູບຖ່າຍ ຫຼື ຮູບພາບ ຫາກມີວັດຖຸອື່ນປະກອບຢູ່ນໍາກົມຊັບສິນທາງປັນຍາ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ເພື່ອໃຫ້ຜູ້ຮ້ອງຂໍຢັ້ງຢືນວ່າວັດຖຸດັ່ງກ່າວ ເປັນພາກສ່ວນໜຶ່ງຂອງແບບອຸດສາຫະກໍາ ຫຼື ເປັນພາກສ່ວນອື່ນ. ໃນກໍລະນີທີ່ ກົມຫາກກວດສອບແລ້ວເຫັນວ່າ ຮູບແຕ້ມ, ຮູບຖ່າຍ ຫຼື ຮູບພາບ ທີ່ຢູ່ໃນສໍານວນຄໍາຮ້ອງ ບໍ່ມີຄວາມກ່ຽວຂ້ອງ ຫຼື ບໍ່ແມ່ນອົງປະກອບຂອງແບບທີ່ຍື່ນຂໍຈົດທະບຽນ,

ກົມຕ້ອງແຈ້ງໃຫ້ຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກຳສະໜອງຮູບແຕ້ມ, ຮູບຖ່າຍ ຫຼື ຮູບພາບ ຄືນໃໝ່ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງຂໍ້ຕົກລົງສະບັບນີ້.

ໃນກໍລະນີທີ່ ກົມຊັບສິນທາງປັນຍາ ເຫັນວ່າຮູບແຕ້ມ, ຮູບຖ່າຍ ຫຼື ຮູບພາບ ປະກອບມີຮູບຮ່າງພາຍນອກຂອງແບບອຸດສາຫະກຳ ທີ່ບໍ່ສາມາດເຂົ້າໃຈໄດ້ ກົມຕ້ອງແຈ້ງໃຫ້ຜູ້ຮ້ອງຂໍຈົດທະບຽນສະໜອງຮູບແຕ້ມ, ຮູບຖ່າຍ ຫຼື ຮູບພາບໃໝ່ທີ່ສາມາດເຂົ້າໃຈໄດ້ ແລະ ຊັດເຈນຂຶ້ນ.

## ມາດຕາ 18 ການດັດແກ້ຄຳຮ້ອງ

ມາດຕາ 42 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ໃນໄລຍະການກວດສອບຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກຳ ສາມາດດັດແກ້ຄຳຮ້ອງໄດ້ທຸກເວລາແຕ່ຕ້ອງດຳເນີນກ່ອນການຈົດທະບຽນ, ການສະຫຼະສິດ, ການປະຕິເສດຂັ້ນສຸດທ້າຍ ຫຼື ການສິ້ນສຸດການພິຈາລະນາອື່ນຂອງຄຳຮ້ອງດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 42 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ໂດຍບໍ່ຕ້ອງຈ່າຍຄ່າທຳນຽມ ແລະ ຄ່າບໍລິການ, ຊຶ່ງການດັດແກ້ຄຳຮ້ອງນັ້ນຕ້ອງບໍ່ໃຫ້ເພີ່ມແບບອຸດສາຫະກຳ, ໝວດຂອງປະເພດ ຫຼື ປ່ຽນແປງລັກສະນະຕົ້ນຕໍຂອງແບບອຸດສາຫະກຳທີ່ຢູ່ໃນສຳນວນຄຳຮ້ອງເບື້ອງຕົ້ນ.

## ມາດຕາ 19 ການກຳນົດຄວາມໃໝ່

ໃນການກຳນົດຄວາມໃໝ່ຂອງແບບອຸດສາຫະກຳ ກົມຊັບສິນທາງປັນຍາ ຕ້ອງສົມທຽບແບບທີ່ຢູ່ໃນຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳກັບຂໍ້ມູນທີ່ໄດ້ມີການເຜີຍແຜ່ກ່ອນໜ້າ ແລະ ຂໍ້ມູນການຈົດທະບຽນທີ່ມີຢູ່ໃນ ສປປ ລາວ ແລະ ຕ່າງປະເທດ ພ້ອມທັງຂໍ້ມູນອື່ນໆ ທີ່ໄດ້ເຜີຍແຜ່ສູ່ສາທາລະນະ.

ໃນກໍລະນີ ທີ່ເຫັນວ່າແບບອຸດສາຫະກຳທີ່ກຳລັງພິຈາລະນາຢູ່ນັ້ນຄືກັນກັບແບບອຸດສາຫະກຳທີ່ໄດ້ຖືກເປີດເຜີຍມາກ່ອນແລ້ວ ຈະຖືວ່າບໍ່ເປັນສິ່ງໃໝ່.

ການດຳເນີນການຕໍ່ໄປນີ້ຢູ່ແຫ່ງໃດໜຶ່ງໃນໂລກ ຈະຖືວ່າເປັນການເປີດເຜີຍແບບອຸດສາຫະກຳ:

1. ໄດ້ຮັບການຈົດທະບຽນ.
2. ເຜີຍແຜ່ ຫຼື ສາມາດກວດຄົ້ນແບບອຸດສາຫະກຳດັ່ງກ່າວ.
3. ເຜີຍແຜ່ໃນວາລະສານ, ສື່ໂຄສະນາ-ການຕະຫຼາດ ຫຼື ບົດຂຽນຕ່າງໆ.
4. ການສະແຫວງຫາຜົນປະໂຫຍດທາງການຄ້າຈາກ ແບບອຸດສາຫະກຳ ຫຼື ວັດຖຸທີ່ນຳໃຊ້ກັບແບບດັ່ງກ່າວ ຫຼື ປະກອບມີແບບອຸດສາຫະກຳດັ່ງກ່າວ.

ນອກຈາກນັ້ນ, ການເຜີຍແຜ່ຂອງແບບອຸດສາຫະກຳ ດ້ວຍທຸກຮູບການຢູ່ແຫ່ງໃດໜຶ່ງໃນໂລກ ກໍ່ຈະຖືວ່າເປັນການເປີດເຜີຍແບບອຸດສາຫະກຳ.

ກໍລະນີຍົກເວັ້ນ ການຕິດຕໍ່ພົວພັນ ຫຼື ການສົ່ງຂໍ້ມູນ ກ່ຽວກັບແບບອຸດສາຫະກຳ ຈະບໍ່ຖືວ່າເປັນການເປີດເຜີຍຕໍ່ສາທາລະນະຊົນ ຖ້າຫາກວ່າການຕິດຕໍ່ພົວພັນດັ່ງກ່າວແມ່ນການກະທຳພາຍໃຕ້ຂໍ້ຜູກມັດທີ່ໃຫ້ຮັກສາເປັນຄວາມລັບ ຫຼື ຢູ່ໃນເງື່ອນໄຂທີ່ບໍ່ມີເຈດຕະນານຳໄປສູ່ການເປີດເຜີຍຂໍ້ມູນດັ່ງກ່າວຕໍ່ສາທາລະນະຊົນ. ການຕິດຕໍ່ພົວພັນດັ່ງລຸ່ມນີ້ ຈະບໍ່ຖືວ່າເປັນການເປີດເຜີຍຕໍ່ສາທາລະນະຊົນ:

1. ພາຍໃຕ້ ຂໍ້ຕົກລົງວ່າດ້ວຍການຮັກສາຄວາມລັບ ທີ່ເປັນລາຍລັກອັກສອນ.
2. ພາຍໃນອົງກອນ ຫຼື ວິສາຫະກິດທີ່ເປັນຜູ້ຖືສິດ.
3. ພາຍໃນຄອບຄົວ, ວິງສາຄະນາຍາດ ຫຼື ບຸກຄົນຮູ້ຈັກທີ່ຖືກແຕ່ງຕັ້ງ.
4. ຕໍ່ກັບທະນາຍຄວາມ ຫຼື ຕົວແທນ.
5. ຕໍ່ກັບຜູ້ທີ່ຈະໄດ້ຮັບສິດຕໍ່ແບບອຸດສາຫະກຳທີ່ບໍ່ທັນໄດ້ນຳໄປໃຊ້ໃນທາງການຄ້າ.

ໃນກໍລະນີ ທີ່ກົມຊັບສິນທາງປັນຍາ ຫາກມີຄວາມສົງໄສກ່ຽວກັບຄວາມໃໝ່ຂອງແບບອຸດສາຫະກຳ ກໍ່ສາມາດແຈ້ງໃຫ້ຜູ້ຮ້ອງຂໍຈົດທະບຽນສະໜອງຄຳຊີ້ແຈງເພື່ອອະທິບາຍ ກ່ຽວກັບທຸກການເປີດເຜີຍ ຫຼື ການຕິດຕໍ່ພົວພັນຕ່າງໆໄດ້.

**ມາດຕາ 20 ການປະເມີນ ກ່ຽວກັບການເປັນສິ່ງປະດັບ ແລະ ລັກສະນະທາງດ້ານເຕັກນິກ**

ແບບອຸດສາຫະກຳ ຕ້ອງເປັນສິ່ງປະດັບຊຶ່ງເຮັດໃຫ້ວັດຖຸທີ່ນຳໃຊ້ກັບແບບອຸດສາຫະກຳ ຫຼື ປະກອບມີແບບອຸດສາຫະກຳຢູ່ນຳນັ້ນມີຮູບຊົງພາຍນອກທີ່ພິເສດ. ເງື່ອນໄຂຂອງການເປັນສິ່ງປະດັບຕ້ອງຖືກປະເມີນບົນພື້ນຖານຮູບຊົງພາຍນອກໂດຍລວມຂອງແບບອຸດສາຫະກຳໂດຍຄຳນຶງເຖິງຮູບຮ່າງ, ເສັ້ນສາຍ, ສີສັນ ຫຼື ອົງປະກອບອື່ນໆ ທີ່ປະກອບສ່ວນເຂົ້າໃນຮູບຊົງພາຍນອກໂດຍລວມຂອງແບບອຸດສາຫະກຳ. ເຖິງແມ່ນວ່າວັດຖຸມີຮູບຊົງພາຍນອກທີ່ໂດດເດັ່ນ, ແຕ່ອາດຈະບໍ່ສາມາດເປັນສິ່ງປະດັບໄດ້ຖ້າວ່າຮູບຊົງພາຍນອກດັ່ງກ່າວ ສະແດງອອກເຖິງລັກສະນະທາງດ້ານເຕັກນິກຂອງການປະດິດສ້າງ. ກໍລະນີທີ່ແບບອຸດສາຫະກຳສະແດງອອກເຖິງລັກສະນະດັ່ງກ່າວແມ່ນຈະຖືກປະຕິເສດການຈົດທະບຽນດັ່ງທີ່ໄດ້ກຳນົດໄວ້ໃນມາດຕາ 22 ຂໍ້ທີ 1 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ.

**ມາດຕາ 21 ຈົດທະບຽນ ແລະ ບັນທຶກການຈົດທະບຽນແບບອຸດສາຫະກຳ**

ກົມຊັບສິນທາງປັນຍາ ຕ້ອງຈົດທະບຽນແບບອຸດສາຫະກຳ, ບັນທຶກຂໍ້ມູນທີ່ກ່ຽວຂ້ອງລົງໃນປຶ້ມບັນທຶກການຈົດທະບຽນ ແລະ ໃນຖານຂໍ້ມູນຂອງກົມ ໃນເມື່ອສຳນວນຄຳຮ້ອງສອດຄ່ອງຕາມເງື່ອນໄຂການຈົດທະບຽນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້.

ກົມຊັບສິນທາງປັນຍາ ຕ້ອງດຳເນີນການເຊັ່ນດຽວກັນ ໃນກໍລະນີ ທີ່ມີການຄັດຄ້ານ ແລະ ຄຳຮ້ອງໄດ້ຜ່ານຂະບວນການຄັດຄ້ານ ຫຼື ການພິຈາລະນາຂັ້ນສຸດທ້າຍແລ້ວ, ແຕ່ການຄັດຄ້ານ ຫຼື ການພິຈາລະນາຂັ້ນສຸດທ້າຍນັ້ນບໍ່ເປັນຜົນ.

**ມາດຕາ 22 ການເຜີຍແຜ່ຜົນຂອງການຈົດທະບຽນ**

ພາຍຫຼັງການຈົດທະບຽນແບບອຸດສາຫະກຳແລ້ວ ກົມຊັບສິນທາງປັນຍາຕ້ອງເຜີຍແຜ່ຜົນຂອງການຈົດທະບຽນດັ່ງກ່າວ ພາຍໃນ ສິບຫ້າວັນ ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 44 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

ຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກຳ ສາມາດສະເໜີໃຫ້ກົມເຜີຍແຜ່ຜົນຂອງການຈົດທະບຽນຄືນໃໝ່ ພ້ອມດ້ວຍຂໍ້ມູນທີ່ຖືກດັດແກ້ໂດຍບໍ່ຕ້ອງຈ່າຍຄ່າບໍລິການ ຊຶ່ງໃນກໍລະນີທີ່ຜູ້ຮ້ອງຂໍເຫັນວ່າການເຜີຍແຜ່ຫາກມີຂໍ້ຜິດພາດ ຕ້ອງຍື່ນຄຳຮ້ອງ ພາຍໃນ ຫົກສິບວັນ ນັບແຕ່ວັນເຜີຍແຜ່ຄັ້ງທຳອິດ.

## ໝວດທີ 3
## ການດຳເນີນຫຼັງການຈົດທະບຽນແບບອຸດສາຫະກຳ

**ມາດຕາ 23 ການປ່ຽນແປງຂໍ້ມູນຫຼັງການຈົດທະບຽນແບບອຸດສາຫະກຳ**

ເຈົ້າຂອງແບບອຸດສາຫະກຳ ສາມາດຍື່ນຄຳຮ້ອງຢູ່ນຳກົມຊັບສິນທາງປັນຍາ ເພື່ອປ່ຽນແປງຂໍ້ມູນ ກ່ຽວກັບຊື່, ທີ່ຢູ່ຫຼື ຊື່ ແລະ ທີ່ຢູ່ ຂອງເຈົ້າຂອງແບບອຸດສາຫະກຳ ຕາມແບບພິມຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ.

ກົມຊັບສິນທາງປັນຍາ ຕ້ອງບັນທຶກທຸກການປ່ຽນແປງລົງໃນຖານຂໍ້ມູນ, ປຶ້ມບັນທຶກການຈົດທະບຽນ ແລະ ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ.

**ມາດຕາ 24 ການຂໍສຳເນົາໃບຢັ້ງຢືນການຈົດທະບຽນແບບອຸດສາຫະກຳ**

ເຈົ້າຂອງແບບອຸດສາຫະກຳ ສາມາດຂໍສຳເນົາໃບຢັ້ງຢືນການຈົດທະບຽນແບບອຸດສາຫະກຳໄດ້ ເພື່ອນຳໃຊ້ເປັນຫຼັກຖານໃນການດຳເນີນຄະດີຢູ່ສານປະຊາຊົນ, ການຈົດທະບຽນແບບອຸດສາຫະກຳຢູ່ຕ່າງປະເທດ ແລະ ໃຊ້ແທນໃບຢັ້ງຢືນການຈົດທະບຽນ ຫຼື ຕໍ່ອາຍຸທີ່ເສຍຫາຍ ຫຼື ເສຍຊຶ່ງເຈົ້າຂອງແບບອຸດສາຫະກຳ ທີ່ໄດ້ຮັບການຈົດທະບຽນຢູ່ກົມຊັບສິນທາງປັນຍາ ຕ້ອງຍື່ນຄຳຮ້ອງຕາມແບບພິມຂອງກົມ ພ້ອມທັງຈ່າຍຄ່າບໍລິການ.

**ມາດຕາ 25 ການດັດແກ້ພາຍຫຼັງການຈົດທະບຽນແບບອຸດສາຫະກຳ**

ພາຍຫຼັງແບບອຸດສາຫະກຳ ໄດ້ຮັບການຈົດທະບຽນແລ້ວ ເຈົ້າຂອງແບບອຸດສາຫະກຳ ສາມາດຍື່ນຄຳຮ້ອງຂໍດັດແກ້ຂໍ້ມູນບາງສ່ວນຢູ່ໃນເອກະສານ ກ່ຽວກັບການຈົດທະບຽນ. ສຳລັບການຂໍດັດແກ້ບາງຂໍ້ຜິດພາດໃນສຳນວນຄຳຮ້ອງຂໍຈົດທະບຽນທີ່ເກີດຈາກຜູ້ຮ້ອງຂໍເອງໂດຍຍື່ນຄຳຮ້ອງຕາມແບບພິມຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ, ຊຶ່ງການດັດແກ້ດັ່ງກ່າວ ກົມຊັບສິນທາງປັນຍາ ອະນຸຍາດໃຫ້ດັດແກ້ໄດ້ພຽງສ່ວນໜ້ອຍເທົ່ານັ້ນ. ກົມຊັບສິນທາງປັນຍາ ຕ້ອງເຜີຍແຜ່ຂໍ້ມູນ ກ່ຽວກັບການດັດແກ້ດັ່ງກ່າວ ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ.

**ມາດຕາ 26 ການຍົກເລີກ ຫຼື ລຶບລ້າງ ການຈົດທະບຽນແບບອຸດສາຫະກຳ**

ບຸກຄົນທີສາມ ມີສິດຍື່ນຄຳຮ້ອງຂໍຍົກເລີກ ຫຼື ລຶບລ້າງ ການຈົດທະບຽນແບບອຸດສາຫະກຳ ພາຍໃນ ຫ້າປີ ນັບແຕ່ວັນເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳເປັນຕົ້ນໄປ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 44 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ. ການຍື່ນຄຳຮ້ອງຂໍຍົກເລີກ ຫຼື ລຶບລ້າງ ການຈົດທະບຽນແບບອຸດສາຫະກຳ ໃຫ້ປະຕິບັດຕາມແບບພິມຂອງກົມຊັບສິນທາງປັນຍາພ້ອມທັງຈ່າຍຄ່າບໍລິການ.

ກົມຊັບສິນທາງປັນຍາ ຕ້ອງແຈ້ງໃຫ້ເຈົ້າຂອງແບບອຸດສາຫະກຳຊາບ ໃນເມື່ອໄດ້ຮັບຄຳຮ້ອງຂໍຍົກເລີກຈາກບຸກຄົນທີສາມ.

ເຈົ້າຂອງແບບອຸດສາຫະກຳ ສາມາດຍື່ນຄຳຊີ້ແຈງເຖິງກົມ ພາຍໃນ ຫົກສິບວັນ ນັບແຕ່ວັນທີອອກແຈ້ງການຂອງກົມເປັນຕົ້ນໄປ.

ກົມຕ້ອງອອກໜັງສືຍົກເລີກ ຫຼື ລຶບລ້າງ ແບບອຸດສາຫະກຳ ແລະ ແຈ້ງໃຫ້ເຈົ້າຂອງແບບອຸດສາຫະກຳຊາບ ໃນກໍລະນີທີ່ເຈົ້າຂອງແບບອຸດສາຫະກຳ ຫາກບໍ່ມີຄຳຊີ້ແຈງໃດໆ ໃຫ້ຖືວ່າເຈົ້າຂອງແບບອຸດສາຫະກຳນັ້ນຍິນຍອມຕໍ່ການຍົກເລີກ ຫຼື ລຶບລ້າງ ການຈົດທະບຽນແບບອຸດສາຫະກຳຂອງຕົນ.

ກົມຕ້ອງຍົກເລີກ ຫຼື ລຶບລ້າງ ການຈົດທະບຽນແບບອຸດສາຫະກຳ ໃນກໍລະນີ ທີ່ບຸກຄົນທີສາມຫາກມີການຮ້ອງຟ້ອງຕໍ່ສານປະຊາຊົນ ແລະ ມີຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດ ໃຫ້ມີການຍົກເລີກ ຫຼື ລຶບລ້າງ ການຈົດທະບຽນແບບອຸດສາຫະກຳດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 139 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

ກົມຕ້ອງແຈ້ງຜົນການຍົກເລີກໃບຢັ້ງຢືນການຈົດທະບຽນ ໃຫ້ເຈົ້າຂອງແບບອຸດສາຫະກຳ ແລະ ບຸກຄົນທີ່ຮ້ອງຂໍຍົກເລີກເພື່ອຊາບ.

ກົມຕ້ອງບັນທຶກລົງໃນຖານຂໍ້ມູນ ແລະ ເຜີຍແຜ່ການຍົກເລີກດັ່ງກ່າວ ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ.

**ມາດຕາ 27 ອາຍຸການປົກປ້ອງ**

ແບບອຸດສາຫະກຳ ມີອາຍຸການປົກປ້ອງ ສິບຫ້າປີ ນັບແຕ່ວັນຍື່ນຄຳຮ້ອງເປັນຕົ້ນໄປ.

ເພື່ອຮັກສາອາຍຸການປົກປ້ອງເຈົ້າຂອງແບບອຸດສາຫະກຳ ຕ້ອງຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ລ່ວງໜ້າເທື່ອລະຫ້າປີ.

**ມາດຕາ 28 ການຮັກສາອາຍຸການປົກປ້ອງ**

ແບບອຸດສາຫະກຳ ທີ່ໄດ້ຈົດທະບຽນແລ້ວ ແມ່ນມີອາຍຸການປົກປ້ອງເບື້ອງຕົ້ນ ຫ້າປີ, ເພື່ອຮັກສາອາຍຸການປົກປ້ອງເຈົ້າຂອງແບບອຸດສາຫະກຳ ສາມາດຂໍຮັກສາອາຍຸການປົກປ້ອງໄດ້ ສອງເທື່ອ, ເທື່ອລະ ຫ້າປີ ໂດຍຍື່ນຄຳຮ້ອງຂໍຕໍ່ອາຍຸການປົກປ້ອງຕາມແບບພິມຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍ ຄ່າທຳນຽມ ແລະ ຄ່າບໍລິການ.

ກ່ອນວັນໝົດອາຍຸແຕ່ລະຄັ້ງ ເຈົ້າຂອງແບບອຸດສາຫະກຳ ສາມາດຈ່າຍຄ່າທຳນຽມ ແລະ ຄ່າບໍລິການໃນການຮັກສາອາຍຸການປົກປ້ອງ ພາຍໃນ ຫົກເດືອນ ຊຶ່ງກົມຊັບສິນທາງປັນຍາ ຈະບໍ່ອອກແຈ້ງການໃຫ້ເຈົ້າຂອງ ແບບອຸດສາຫະກຳ ມາຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ດັ່ງກ່າວ. ກົມຈະແຈ້ງໃຫ້ເຈົ້າຂອງຊາບພຽງແຕ່ວ່າ ແບບອຸດສາຫະກຳນັ້ນໄດ້ໝົດອາຍຸການນຳໃຊ້ແລ້ວ ຍ້ອນບໍ່ຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ສຳລັບການຮັກສາອາຍຸການ.

ໃນກໍລະນີ ທີ່ເຈົ້າຂອງແບບອຸດສາຫະກຳ ບໍ່ໄດ້ຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ຕາມເວລາທີ່ໄດ້ກຳນົດໄວ້ ກົມຊັບສິນທາງປັນຍາ ສາມາດເລື່ອນເວລາໃນການຈ່າຍອອກໄປອີກ ຫົກເດືອນ ນັບແຕ່ວັນໝົດອາຍຸຂອງການຮັກສາອາຍຸການປົກປ້ອງ ແຕ່ຕ້ອງໄດ້ຈ່າຍຄ່າປັບໃໝ ສຳລັບຄວາມລ່າຊ້າດັ່ງກ່າວ.

**ມາດຕາ 29 ການໂອນສິດ ແລະ ການບັນທຶກຂໍ້ມູນການໂອນສິດ**

ເຈົ້າຂອງແບບອຸດສາຫະກຳ ສາມາດໂອນສິດຂອງຕົນບາງສ່ວນ ຫຼື ທັງໝົດດ້ວຍການເຮັດສັນຍາ, ການສືບທອດມູນມໍລະດົກ ຫຼື ການໃຫ້ເປັນຂອງຂວັນ.

ໃນກໍລະນີ ທີ່ມີການໂອນສິດຕໍ່ແບບອຸດສາຫະກຳ ທີ່ໄດ້ຮັບການຈົດທະບຽນ, ຜູ້ໂອນສິດ ຫຼື ຜູ້ຮັບໂອນສິດຕ້ອງແຈ້ງ ກ່ຽວກັບການໂອນສິດດັ່ງກ່າວ ໃຫ້ກົມຊັບສິນທາງປັນຍາຊາບ ຕາມແບບພິມຂອງກົມ ພ້ອມທັງຈ່າຍຄ່າບໍລິການ. ກົມຕ້ອງບັນທຶກການໂອນສິດດັ່ງກ່າວເຂົ້າໃນຖານຂໍ້ມູນ, ປຶ້ມບັນທຶກການຈົດທະບຽນ, ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ ແລະ ອອກໃບຢັ້ງຢືນການໂອນສິດດັ່ງກ່າວໃຫ້ແກ່ຜູ້ຮັບໂອນສິດ. ຖ້າຜູ້ທີ່ໄດ້ຮັບໂອນສິດຫາກເປັນຜູ້ແຈ້ງການໂອນສິດ, ຜູ້ກ່ຽວຕ້ອງສົ່ງສຳເນົາເອກະສານດັ່ງກ່າວໃຫ້ຜູ້ໂອນສິດ.

ໃນກໍລະນີ ທີ່ມີການໂອນກຳມະສິດຂອງນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງກັບແບບອຸດສາຫະກຳ ຕ້ອງປະຕິບັດຕາມທີ່ກຳນົດໄວ້ໃນເອກະສານການໂອນສິດດັ່ງກ່າວ. ໃນກໍລະນີ ທີ່ບໍ່ໄດ້ກຳນົດໄວ້ເປັນຢ່າງອື່ນ, ການໂອນກຳມະສິດຂອງນິຕິບຸກຄົນ ຫຼື ການຈັດຕັ້ງ ໃຫ້ຖືວ່າແມ່ນການໂອນສິດທັງໝົດຕໍ່ແບບອຸດສາຫະກຳຂອງນິຕິບຸກຄົນ ຫຼື ການຈັດຕັ້ງດັ່ງກ່າວນັ້ນ.

ໃນກໍລະນີ ທີ່ຕ້ອງການຄວາມກະຈ່າງແຈ້ງ ຫຼື ມີຄວາມສົງໃສກົມຊັບສິນທາງປັນຍາ ສາມາດແຈ້ງໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ແຈ້ງການໂອນສິດນັ້ນສະໜອງຂໍ້ມູນ ຫຼື ເອກະສານເພີ່ມຕື່ມ.

ການໂອນສິດ ຈະບໍ່ມີຜົນສັກສິດຕໍ່ຄູ່ກໍລະນີ ຈົນກວ່າພວກກ່ຽວໄດ້ມີການແຈ້ງການໂອນສິດ ແລະ ໄດ້ບັນທຶກການໂອນສິດດັ່ງກ່າວ ນຳກົມຊັບສິນທາງປັນຍາ.

ມາດຕາ 30 ການອະນຸຍາດນຳໃຊ້

ເຈົ້າຂອງສິດຕໍ່ແບບອຸດສາຫະກຳ ສາມາດອະນຸຍາດໃຫ້ບຸກຄົນອື່ນນຳໃຊ້ແບບອຸດສາຫະກຳຂອງຕົນ ເພື່ອສະແຫວງຫາຜົນປະໂຫຍດຈາກສິດດັ່ງກ່າວ ບາງສ່ວນ ຫຼື ທັງໝົດ ຊຶ່ງສາມາດດຳເນີນໂດຍການເຮັດສັນຍາການອະນຸຍາດນຳໃຊ້ແຕ່ບໍ່ຖືເປັນການໂອນກຳມະສິດແບບອຸດສາຫະກຳ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 47 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

ໃນກໍລະນີ ມີການໂອນກຳມະສິດຂອງນິຕິບຸກຄົນ ທີ່ໄດ້ຮັບການອະນຸຍາດນຳໃຊ້ແບບອຸດສາຫະກຳ ໃຫ້ຖືວ່າການອະນຸຍາດນຳໃຊ້ດັ່ງກ່າວ ຖືກໂອນພ້ອມກັບການໂອນກຳມະສິດຂອງນິຕິບຸກຄົນນັ້ນ ເວັ້ນເສຍແຕ່ໄດ້ກຳນົດໄວ້ເປັນຢ່າງອື່ນຢູ່ໃນສັນຍາການອະນຸຍາດນຳໃຊ້ ຫຼື ໃນເອກະສານການໂອນກຳມະສິດດັ່ງກ່າວ.

ໃນກໍລະນີ ມີການໂອນກຳມະສິດຂອງນິຕິບຸກຄົນ ທີ່ໄດ້ຮັບການອະນຸຍາດນຳໃຊ້ແບບອຸດສາຫະກຳ ດັ່ງກ່າວ, ສັນຍາການອະນຸຍາດນຳໃຊ້ແບບອຸດສາຫະກຳໃຫ້ແກ່ບຸກຄົນອື່ນ ຈະບໍ່ຖືວ່າເປັນໂມຄະ ເວັ້ນເສຍແຕ່ໄດ້ກຳນົດໄວ້ເປັນຢ່າງອື່ນ ໃນສັນຍາການອະນຸຍາດນຳໃຊ້.

## ໝວດທີ 4
## ການເປັນຜູ້ຕາງໜ້າໃນການຈົດທະບຽນແບບອຸດສາຫະກຳ ແລະ ດຳເນີນການອື່ນ

**ມາດຕາ 31 ບຸກຄົນທີ່ມີສິດເປັນຜູ້ຕາງໜ້າໃນການຈົດທະບຽນແບບອຸດສາຫະກຳ ແລະ ດຳເນີນການອື່ນ**

ບຸກຄົນ ມີສິດຕາງໜ້າໃຫ້ແກ່ຜູ້ທີ່ມີສິດໄດ້ຮັບການປົກປ້ອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 26 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ໃນການດຳເນີນການຈົດທະບຽນ ແລະ ດຳເນີນການອື່ນ ມີດັ່ງນີ້:

1. ໃນກໍລະນີ ຄຳຮ້ອງດຽວທີ່ມີຜູ້ຍື່ນຮ່ວມກັນຫຼາຍຄົນ ຕ້ອງແຕ່ງຕັ້ງບຸກຄົນໃດໜຶ່ງ ໃນນັ້ນເປັນຜູ້ຕາງໜ້າໂດຍແມ່ນບຸກຄົນໃດໜຶ່ງ ໃນນັ້ນຂອງພວກກ່ຽວ;
2. ທະນາຍຄວາມ ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນການທາງດ້ານກົດໝາຍໃນ ສປປ ລາວ;
3. ຜູ້ປະກອບການທາງດ້ານຊັບສິນທາງປັນຍາ;
4. ຜູ້ຕາງໜ້າ ຫຼື ພະນັກງານຂອງນິຕິບຸກຄົນ ຫຼື ການຈັດຕັ້ງ;
5. ບຸກຄົນທົ່ວໄປ ທີ່ຜູ້ຮ້ອງຂໍຈົດທະບຽນວ່າຈ້າງ.

ສຳລັບຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກຳ ທີ່ເປັນຄົນຕ່າງປະເທດ ຕ້ອງຍື່ນຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ຜ່ານຜູ້ປະກອບການທາງດ້ານຊັບສິນທາງປັນຍາ ຫຼື ທະນາຍຄວາມ ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນການທາງດ້ານກົດໝາຍໃນ ສປປ ລາວ ເທົ່ານັ້ນ. ບຸກຄົນທີ່ມີສິດເປັນຜູ້ຕາງໜ້າ ຕ້ອງມີຄວາມຮູ້ດ້ານຊັບສິນທາງປັນຍາ ແລະ ມີທີ່ຢູ່ໃນ ສປປ ລາວ ແລະ ຕ້ອງໄດ້ຮັບອະນຸຍາດ ຈາກກົມຊັບສິນທາງປັນຍາ.

ມາດຕາ 32 ການແຕ່ງຕັ້ງຜູ້ຕາງໜ້າ

ຜູ້ຕາງໜ້າຕ້ອງ ແມ່ນບຸກຄົນທີ່ໄດ້ຮັບການແຕ່ງຕັ້ງຕາມໃບມອບສິດທີ່ມີລາຍເຊັນຂອງຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກຳ ຫຼື ຜູ້ມອບສິດ.

ໃນກໍລະນີ ທີ່ຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ຫາກຍື່ນຮ່ວມກັນຫຼາຍຄົນ ໃບມອບສິດຕ້ອງມີລາຍເຊັນຂອງໝົດທຸກຄົນ ເວັ້ນເສຍແຕ່ມີບຸກຄົນໃດໜຶ່ງຫາກເສຍຊີວິດ.

ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 33 ຂອງຂໍ້ຕົກລົງສະບັບນີ້ ແລະ ການກຳນົດອື່ນໃນໝວດນີ້, ຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກຳ ສາມາດແຕ່ງຕັ້ງຜູ້ຕາງໜ້າໄດ້ຫຼາຍຄົນ ໂດຍທີ່ຜູ້ຕາງໜ້າທັງໝົດດັ່ງກ່າວ ມີທີ່ຢູ່ບ່ອນດຽວກັນ.

ມາດຕາ 33 ການມອບສິດ

ການມອບສິດ ໝາຍເຖິງໃບມອບສິດທີ່ເຈົ້າຂອງສິດໄດ້ມອບໝາຍໃຫ້ບຸກຄົນໃດໜຶ່ງ ຫຼື ຫຼາຍຄົນ ປະຕິບັດໜ້າທີ່ແທນຕົນ.

ໃບມອບສິດຕ້ອງກຳນົດ ຄືດັ່ງນີ້:

1. ເງື່ອນໄຂ ແລະ ຂອບເຂດ ຂອງການເປັນຜູ້ຕາງໜ້າ;
2. ສິດທີ່ຖືກມອບໝາຍໃຫ້ດຳເນີນການໃດໜຶ່ງທີ່ກ່ຽວຂ້ອງ ຢູ່ນຳກົມຊັບສິນທາງປັນຍາ;
3. ໄລຍະເວລາ, (ຖ້າມີ);
4. ຜູ້ມອບສິດສາມາດຍົກເລີກໄດ້ທຸກເວລາ ໂດຍບໍ່ສົ່ງຜົນກະທົບຕໍ່ສິດຂອງຜູ້ຕາງໜ້າໃນການໄດ້ຮັບຄ່າຕອບແທນຈາກການບໍລິການ ແລະ ຄ່າໃຊ້ຈ່າຍຕ່າງໆທີ່ເກີດຂຶ້ນໃນລະຫວ່າງການຕິດຕໍ່ພົວພັນກັບກົມຊັບສິນທາງປັນຍາ.

ກົມຊັບສິນທາງປັນຍາ ຕ້ອງຮັບຮູ້ເງື່ອນໄຂທີ່ໄດ້ກຳນົດໄວ້ໃນໃບມອບສິດ, ເວັ້ນເສຍແຕ່ເງື່ອນໄຂຂອງໃບມອບສິດຫາກຂັດກັບກົດໝາຍ ຫຼື ລະບຽບການ.

ກົມຊັບສິນທາງປັນຍາ ຈະຖືວ່າໃບມອບສິດໜຶ່ງນໍາໃຊ້ສະເພາະແຕ່ຄຳຮ້ອງດຽວເທົ່ານັ້ນ. ໃນກໍລະນີ ໃບມອບສິດບໍ່ໄດ້ກຳນົດຂອບເຂດ ຫຼື ໄລຍະເວລາ ຂອງການເປັນຜູ້ຕາງໜ້າ ຫຼື ການດຳເນີນການອື່ນທີ່ກ່ຽວຂ້ອງກັບໃບມອບສິດດັ່ງກ່າວ ແລະ ອາຍຸຂອງໃບມອບສິດຖືວ່າສິ້ນສຸດລົງໃນເມື່ອທຸກບັນຫາທີ່ກ່ຽວຂ້ອງກັບຄຳຮ້ອງດັ່ງກ່າວ ຫຼື ການດຳເນີນການອື່ນຫາກສຳເລັດແລ້ວ.

ການມອບສິດທີ່ມີຜົນບັງຄັບໃຊ້ຕ້ອງເຮັດເປັນລາຍລັກອັກສອນ ແລະ ມີລາຍເຊັນຂອງຜູ້ມອບສິດ. ໃນກໍລະນີ ຜູ້ອອກໃບມອບສິດເປັນນິຕິບຸກຄົນ ຫຼື ການຈັດຕັ້ງ, ໃບມອບສິດຕ້ອງໄດ້ລົງລາຍເຊັນໂດຍຜູ້ມີສິດອຳນາດຂອງນິຕິບຸກຄົນ ຫຼື ການຈັດຕັ້ງດັ່ງກ່າວ.

ມາດຕາ 34 ການສິ້ນສຸດການເປັນຜູ້ຕາງໜ້າ

ການເປັນຜູ້ຕາງໜ້າຈະສິ້ນສຸດລົງ ໃນກໍລະນີ ການມອບສິດຖືກຍົກເລີກໂດຍຜູ້ມອບສິດ ຫຼື ຜູ້ຕາງໜ້າຖອນຕົວ. ໃນກໍລະນີ ຜູ້ຕາງໜ້າຫາກຖອນຕົວຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຜູ້ມອບສິດ ແລະ ກົມຊັບສິນທາງປັນຍາຊາບ.

## ໝວດທີ 5
## ການທົບທວນຄືນ ແລະ ການແກ້ໄຂຂໍ້ຂັດແຍ່ງ ທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນແບບອຸດສາຫະກຳ

ມາດຕາ 35 ການທົບທວນຄືນ

ກົມຊັບສິນທາງປັນຍາ ມີສິດທົບທວນຄືນການຈົດທະບຽນແບບອຸດສາຫະກຳ ໂດຍດຳເນີນການທາງດ້ານບໍລິຫານ ຕາມຄວາມຈຳເປັນເພື່ອການປ້ອງກັນ ແລະ ແກ້ໄຂຂໍ້ຜິດພາດ.

ມາດຕາ 36 ການທົບທວນຄືນທາງດ້ານບໍລິຫານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດສະເໜີຂໍໃຫ້ກົມຊັບສິນທາງປັນຍາ ທົບທວນຄືນການດຳເນີນການ ກ່ຽວກັບການຈົດທະບຽນແບບອຸດສາຫະກຳຂອງຕົນ ທີ່ມີຂໍ້ຜິດພາດ ຫຼື ບໍ່ປະຕິບັດຕາມເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ພາຍໃນເວລາ ເກົ້າສິບວັນ ພາຍຫຼັງວັນອອກແຈ້ງການຂອງກົມຕາມແຕ່ກໍລະນີດັ່ງນີ້:

1. ສະເໜີຂໍດັດແກ້ຂໍ້ຜິດພາດດັ່ງກ່າວ ທີ່ເກີດຈາກກົມຊັບສິນທາງປັນຍາ ໂດຍບໍ່ຈ່າຍຄ່າທຳນຽມ ຫຼື ຄ່າບໍລິການ;
2. ສະເໜີຂໍດັດແກ້ຂໍ້ຜິດພາດ ທີ່ເກີດຈາກຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກຳ ແລະ ຈ່າຍຄ່າບໍລິການ;
3. ສະເໜີຂໍໃຫ້ພິຈາລະນາຄືນໃໝ່ ໂດຍຕ້ອງປະກອບມີຂໍ້ມູນ ດັ່ງນີ້:
   3.1. ເງື່ອນໄຂ ຫຼື ການຕົກລົງທີ່ຕ້ອງການໃຫ້ທົບທວນຄືນ;
   3.2. ຂໍ້ເທັດຈິງ ແລະ ພື້ນຖານທາງດ້ານກົດໝາຍ;
   3.3. ມາດຕະການທີ່ສະເໜີໃຫ້ກົມຊັບສິນທາງປັນຍາພິຈາລະນາ.

ການສະເໜີຍັງສາມາດລວມເອົາ ຄຳຊີ້ແຈງ ຫຼື ການອະທິບາຍ ຊຶ່ງຜູ້ສະເໜີເຫັນວ່າຈະເປັນການສະໜັບສະໜູນໃຫ້ແກ່ການພິຈາລະນາຄືນໃໝ່ ຫຼື ສະເໜີພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ ໂດຍບໍ່ຈ່າຍຄ່າບໍລິການ.

**ມາດຕາ 37 ການສະເໜີໃຫ້ຢຸດຊົ່ວຄາວ**

ການສະເໜີໃຫ້ທົບທວນທາງດ້ານບໍລິຫານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 36 ຂອງຂໍ້ຕົກລົງສະບັບນີ້ອາດລວມເຖິງການສະເໜີໃຫ້ຢຸດຊົ່ວຄາວການປະຕິບັດຜົນການພິຈາລະນາຂອງກົມຊັບສິນທາງປັນຍາ ທີ່ຜູ້ສະເໜີຂໍໃຫ້ພິຈາລະນາຄືນໃໝ່ ຫຼື ສະເໜີພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ ເພື່ອຄວາມຍຸຕິທຳໂດຍຄຳນຶງເຖິງຜົນປະໂຫຍດຂອງບຸກຄົນທີສາມ.

**ມາດຕາ 38 ການພິຈາລະນາຄືນໃໝ່**

ກົມຊັບສິນທາງປັນຍາ ຕ້ອງຮັບການສະເໜີຂໍໃຫ້ພິຈາລະນາຄືນໃໝ່ ກ່ຽວກັບການຈົດທະບຽນແບບອຸດສາຫະກຳ ຊຶ່ງຜູ້ສະເໜີຕ້ອງມີເຫດຜົນທີ່ພຽງພໍໃນການສະເໜີໃຫ້ທົບທວນຜົນການພິຈາລະນາ ທີ່ຕົນເຫັນວ່າບໍ່ສອດຄ່ອງຕາມຂໍ້ຕົກລົງສະບັບນີ້.

ໃນກໍລະນີ ຜູ້ສະເໜີບໍ່ພໍໃຈຕໍ່ຜົນການພິຈາລະນາຄືນໃໝ່ ສາມາດສະເໜີພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ ໄປຍັງຄະນະກຳມະການພິຈາລະນາຂັ້ນສຸດທ້າຍຂອງກົມຊັບສິນທາງປັນຍາ ພາຍໃນ ສາມສິບວັນ ນັບແຕ່ວັນອອກແຈ້ງການຂອງກົມຊັບສິນທາງປັນຍາ ກ່ຽວກັບຜົນການພິຈາລະນາດັ່ງກ່າວເປັນຕົ້ນໄປ ແລະ ຖ້າຜູ້ສະເໜີບໍ່ປະຕິບັດພາຍໃນໄລຍະເວລາດັ່ງກ່າວ ຖືວ່າຜູ້ກ່ຽວສະຫຼະສິດ.

**ມາດຕາ 39 ການພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນການຢູ່ນຳກົມຊັບສິນທາງປັນຍາ ກ່ຽວກັບການຈົດທະບຽນແບບອຸດສາຫະກຳ ມີສິດສະເໜີຂໍພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ ໄປຍັງຄະນະກຳມະການພິຈາລະນາຂັ້ນສຸດທ້າຍ ເພື່ອພິຈາລະນາໂດຍຈ່າຍຄ່າບໍລິການ.

ພະນັກງານວິຊາການຂອງກົມຊັບສິນທາງປັນຍາທີ່ມີສ່ວນຮ່ວມໃນການອະນຸມັດ, ການຢັ້ງຢືນ, ການປະຕິເສດ ຫຼື ການພິຈາລະນາທີ່ກໍ່ໃຫ້ເກີດມີການສະເໜີຂໍພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ ຕ້ອງໃຫ້ຄຳຊີ້ແຈງ ກ່ຽວກັບຫຼັກການທາງດ້ານກົດໝາຍ ແລະ ຂໍ້ເທັດຈິງ ກ່ຽວກັບຜົນການພິຈາລະນາດັ່ງກ່າວ ເພື່ອເປັນຂໍ້ມູນໃຫ້ແກ່ຄະນະກຳມະການພິຈາລະນາຂັ້ນສຸດທ້າຍ.

ຄະນະກຳມະການພິຈາລະນາຂັ້ນສຸດທ້າຍ ສາມາດເຊີນຜູ້ຊ່ຽວຊານສະເພາະດ້ານມາໃຫ້ຄຳປຶກສາ. ຄະນະກຳມະການພິຈາລະນາຂັ້ນສຸດທ້າຍ ຕ້ອງດຳເນີນການພິຈາລະນາຕາມມາດຕານີ້ ແລະ ຕ້ອງບັນທຶກການຕົກລົງເປັນລາຍລັກອັກສອນ ຂອງຄະນະກຳມະການພິຈາລະນາຂັ້ນສຸດທ້າຍ ໂດຍລະບຸຫຼັກການທາງ

ດ້ານກົດໝາຍ ແລະ ຂໍ້ເທັດຈິງທີ່ກ່ຽວຂ້ອງ. ບົດບັນທຶກການຕົກລົງດັ່ງກ່າວ ຕ້ອງສົ່ງໃຫ້ຜູ້ສະເໜີຂໍໃຫ້ພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານເພື່ອຮັບຊາບ. ການສະເໜີຂໍພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານດັ່ງກ່າວ ຖືວ່າເປັນໂມຄະ ໃນກໍລະນີທີ່ຜູ້ສະເໜີບໍ່ສາມາດສະໜອງຂໍ້ມູນທີ່ຈໍາເປັນ ຕາມທີ່ກໍານົດໄວ້ໃນຂໍ້ 3 ມາດຕາ 36 ຂອງຂໍ້ຕົກລົງສະບັບນີ້.

ຄະນະກໍາມະການພິຈາລະນາຂັ້ນສຸດທ້າຍ ຕ້ອງສົ່ງສໍານວນຄໍາສະເໜີຂໍພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານພ້ອມດ້ວຍບົດບັນທຶກການຕົກລົງຂອງຕົນ ໃຫ້ກົມຊັບສິນທາງປັນຍາ ເພື່ອອອກແຈ້ງການ ກ່ຽວກັບຜົນຂອງການຕົກລົງຂອງຄະນະກໍາມະການພິຈາລະນາຂັ້ນສຸດທ້າຍ ໃຫ້ຄູ່ກໍລະນີຊາບ ຊຶ່ງຖືວ່າເປັນການສິ້ນສຸດການພິຈາລະນາທາງດ້ານບໍລິຫານ.

**ມາດຕາ 40 ຄະນະກໍາມະການພິຈາລະນາຂັ້ນສຸດທ້າຍ**

ກົມຊັບສິນທາງປັນຍາ ຕ້ອງສ້າງຕັ້ງຄະນະກໍາມະການພິຈາລະນາຂັ້ນສຸດທ້າຍ ເພື່ອດໍາເນີນການພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ ກ່ຽວກັບການອະນຸມັດ, ການຢັ້ງຢືນ, ການປະຕິເສດ ຫຼື ຜົນການພິຈາລະນາ ກ່ຽວກັບຂັ້ນຕອນການຈົດທະບຽນແບບອຸດສາຫະກໍາ.

ຄະນະກໍາມະການພິຈາລະນາຂັ້ນສຸດທ້າຍ ຕ້ອງເຄື່ອນໄຫວເປັນອິດສະຫຼະ ແລະ ບໍ່ຂຶ້ນກັບພະແນກໃດພາຍໃນກົມຊັບສິນທາງປັນຍາ ຊຶ່ງສາມາດສ້າງຕັ້ງຂຶ້ນແບບຖາວອນຫຼືຊົ່ວຄາວກໍໄດ້.

ບຸກຄົນທີ່ມີສ່ວນຮ່ວມໃນການອະນຸມັດ, ການຢັ້ງຢືນ, ການປະຕິເສດ ຫຼື ການກໍານົດເງື່ອນໄຂ ຫຼື ການຕົກລົງທີ່ກໍ່ໃຫ້ເກີດເປັນສາເຫດຂອງການສະເໜີຂໍພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ ບໍ່ສາມາດເຂົ້າຮ່ວມຢູ່ໃນຄະນະກໍາມະການພິຈາລະນາຂັ້ນສຸດທ້າຍ.

## ໝວດທີ 6
## ການສ້າງສໍານວນເອກະສານຂຶ້ນໃໝ່

**ມາດຕາ 41 ສໍານວນເອກະສານເສຍຫາຍ ຫຼື ຊອກບໍ່ເຫັນ**

ໃນກໍລະນີສໍານວນເອກະສານ ຫຼື ເອກະສານອື່ນໆ ທີ່ກ່ຽວຂ້ອງກັບການຈົດທະບຽນແບບອຸດສາຫະກໍາ ຫາກເກີດມີການເສຍຫາຍ ຫຼື ຊອກບໍ່ເຫັນ ກົມຊັບສິນທາງປັນຍາ ຕ້ອງສ້າງສໍາເນົາສໍານວນເອກະສານດັ່ງກ່າວຂຶ້ນມາໃໝ່.

**ມາດຕາ 42 ການສ້າງສໍານວນເອກະສານຂຶ້ນໃໝ່**

ກົມຊັບສິນທາງປັນຍາ ຕ້ອງສ້າງສໍາເນົາສໍານວນເອກະສານ ຫຼື ເອກະສານອື່ນໆ ທີ່ເສຍຫາຍ ຫຼື ຊອກບໍ່ເຫັນນັ້ນຂຶ້ນໃໝ່. ຖ້າສໍານວນເອກະສານ ຫຼື ເອກະສານອື່ນໆ ທີ່ພົວພັນເຖິງຄໍາຮ້ອງ ຫຼື ການດໍາເນີນການອື່ນໆຫາກເສຍຫາຍ ຫຼື ຊອກບໍ່ເຫັນ ກົມຕ້ອງສະເໜີໃຫ້ຜູ້ຍື່ນຄໍາຮ້ອງ ຫຼື ເຈົ້າຂອງສໍານວນເອກະສານສົ່ງສໍາເນົາເອກະສານທີ່ກ່ຽວຂ້ອງ ຫຼື ເອກະສານທີ່ໄດ້ຕິດຕໍ່ພົວພັນກັບກົມຊັບສິນທາງປັນຍາພ້ອມທັງຢັ້ງຢືນຄວາມຖືກຕ້ອງ ແລະ ຄົບຖ້ວນຂອງສໍາເນົາດັ່ງກ່າວ ລວມທັງເອກະສານ ຫຼື ສໍານວນເອກະສານທີ່ກ່ຽວຂ້ອງທີ່ໄດ້ຕິດຕໍ່ພົວພັນກັບກົມຊັບສິນທາງປັນຍາ ທີ່ບໍ່ມີການບັນທຶກໄວ້ແຕ່ຜູ້ຮ້ອງຂໍຈົດທະບຽນແບບອຸດສາຫະກໍາ ຫຼື ເຈົ້າຂອງສໍານວນເອກະສານນັ້ນຮັບຮູ້.

## ໝວດທີ 7
## ອົງການຄຸ້ມຄອງວຽກງານແບບອຸດສາຫະກຳ

**ມາດຕາ 43 ອົງການຄຸ້ມຄອງ**

ກົມຊັບສິນທາງປັນຍາ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເປັນຜູ້ຮັບຜິດຊອບພິຈາລະນາຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ແລະ ອອກໃບຢັ້ງຢືນການຈົດທະບຽນແບບອຸດສາຫະກຳ ຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້.

ພະແນກວິທະຍາສາດ ແລະ ເຕັກໂນໂລຊີແຂວງ, ນະຄອນຫຼວງ ເປັນຜູ້ຮັບຜິດຊອບໃຫ້ການບໍລິການກ່ຽວກັບການຮັບຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ຕາມການມອບໝາຍຂອງກົມຊັບສິນທາງປັນຍາ.

ຫ້ອງການວິທະຍາສາດ ແລະ ເຕັກໂນໂລຊີເມືອງ, ເທດສະບານ, ນະຄອນ ແມ່ນປະຕິບັດຕາມການມອບໝາຍຂອງພະແນກວິທະຍາສາດ ແລະ ເຕັກໂນໂລຊີແຂວງ, ນະຄອນຫຼວງ.

**ມາດຕາ 44 ສິດ ແລະ ໜ້າທີ່ ຂອງກົມຊັບສິນທາງປັນຍາ**

ກົມຊັບສິນທາງປັນຍາ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ຂໍ້ຕົກລົງ, ອອກຄຳແນະນຳ ແລະ ແຈ້ງການ ກ່ຽວກັບແບບອຸດສາຫະກຳ;
2. ຄົ້ນຄວ້າ ແລະ ນຳສະເໜີກະຊວງ ເພື່ອອອກນິຕິກຳ ແລະ ລະບຽບການ ໃນການຄຸ້ມຄອງ ແລະ ປົກປ້ອງແບບອຸດສາຫະກຳ;
3. ຮັບ ແລະ ພິຈາລະນາ ສຳນວນຄຳຮ້ອງຂໍຈົດທະບຽນ, ການຕໍ່ອາຍຸ, ການບັນທຶກການປ່ຽນຊື່ ຫຼື ທີ່ຢູ່ການອະນຸຍາດນຳໃຊ້, ການໂອນສິດ ແລະ ການສະເໜີອື່ນ ກ່ຽວກັບແບບອຸດສາຫະກຳ;
4. ບັນທຶກ ແລະ ເກັບຮັກສາຂໍ້ມູນ ກ່ຽວກັບແບບອຸດສາຫະກຳ;
5. ໃຫ້ບໍລິການຄົ້ນຫາແບບອຸດສາຫະກຳ ໃນຖານຂໍ້ມູນຂອງກົມຊັບສິນທາງປັນຍາ;
6. ຈົດທະບຽນ, ແຈ້ງປະຕິເສດ, ຍົກເລີກຫຼືລົບລ້າງ ແລະ ອື່ນໆ ກ່ຽວກັບການຈົດທະບຽນແບບອຸດສາຫະກຳ;
7. ຄົ້ນຄວ້າ ແລະ ພິຈາລະນາ ຄຳສະເໜີຂໍຄັດຄ້ານຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ;
8. ຄົ້ນຄວ້າ ແລະ ພິຈາລະນາ ຄຳສະເໜີໃຫ້ທົບທວນຄືນທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນແບບອຸດສາຫະກຳ;
9. ຄົ້ນຄວ້າ ແລະ ພິຈາລະນາ ຄຳສະເໜີຂໍແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນແບບອຸດສາຫະກຳ;
10. ຊຸກຍູ້ ແລະ ສົ່ງເສີມ ວຽກງານການຈົດທະບຽນແບບອຸດສາຫະກຳ;
11. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ.

**ມາດຕາ 45 ສິດ ແລະ ໜ້າທີ່ ຂອງພະແນກວິທະຍາສາດ ແລະ ເຕັກໂນໂລຊີແຂວງ, ນະຄອນຫຼວງ**

ພະແນກວິທະຍາສາດ ແລະ ເຕັກໂນໂລຊີແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຄຳຮ້ອງ, ກວດຄວາມຖືກຕ້ອງ ແລະ ຄົບຖ້ວນ ຂອງສຳນວນຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳຕາມເງື່ອນໄຂຕໍ່າສຸດ;
2. ນຳສົ່ງສຳນວນຄຳຮ້ອງ, ຄ່າທຳນຽມ ແລະ ຄ່າບໍລິການ ໃຫ້ກົມຊັບສິນທາງປັນຍາ ເພື່ອດຳເນີນການຕາມຂັ້ນຕອນຕໍ່ໄປ;

3. ມອບໝາຍຄວາມຮັບຜິດຊອບໃຫ້ຫ້ອງການວິທະຍາສາດ ແລະ ເຕັກໂນໂລຊີເມືອງ, ເທດສະບານ ແລະ ນະຄອນ ຕາມຄວາມເໝາະສົມ;
4. ຊຸກຍູ້ ແລະ ສົ່ງເສີມ ວຽກງານການຈົດທະບຽນແບບອຸດສາຫະກຳ;
5. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງກົມຊັບສິນທາງປັນຍາ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 46 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຊັບສິນທາງປັນຍາ, ພະແນກວິທະຍາສາດ ແລະ ເຕັກໂນໂລຊີແຂວງ, ນະຄອນຫຼວງ ແລະຫ້ອງການວິທະຍາສາດ ແລະ ເຕັກໂນໂລຊີເມືອງ, ເທດສະບານ ແລະ ນະຄອນ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 47 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດເມື່ອໄດ້ລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນ ຂໍ້ຕົກລົງ ຂອງລັດຖະມົນຕີກະຊວງວິທະຍາສາດ ແລະເຕັກໂນໂລຊີ ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ກ່ຽວກັບແບບອຸດສາຫະກຳ ສະບັບເລກທີ 755/ກວຕ, ລົງວັນທີ 20 ກັນຍາ 2012.

ຂໍ້ກຳນົດ ແລະ ຂໍ້ຕົກລົງໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ລັດຖະມົນຕີ**
**ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ**

ບໍ່ວຽງຄຳ ວົງດາລາ